ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-30 ມີນາ 2023
ປີທີ 12
ສະບັບທີ 915
ລາຍສັປະດາ

## ວາງພວງມາລາ ແລະ ກະຕ່າດອກໄມ້ ໂອກາດວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 68 ປີ





ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 68 ປີ (22/3/1955-22/3/2023), ການນຳພັກ-ລັດຖະບານ ແຫ່ງ ສປປລາວ ນຳໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ປະທານປະເທດ ແຫ່ງ ສປປ ລາວ ໄດ້ເຂົ້າວາງພວງມາລາຢູ່ອານຸສາວະລີນັກຮົບນິລະນາມ (ດາວແດງ) ແລະ ວາງກະຕ່າດອກໄມ້ຢູ່ໜ້າຮູບປັ້ນຫຼໍ່ຂອງປະທານ ໄກສອນ ພົມວິຫານ ໃນຕອນເຊົ້າວັນທີ 22 ມີນານີ້.

ການວາງພວງມາລາໃນຄັ້ງນີ້, ແມ່ນເພື່ອເປັນການສະແດງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນ ເຖິງຄຸນງາມຄວາມດີ, ນ້ຳໃຈຕໍ່ສູ້ຢ່າງພິລະອາດຫານ ແລະ ບໍ່ຍອມຈຳນົນຂອງບັນພະບູລຸດລາວ ກໍຄືບັນດານັກຮົບປະຕິວັດ ທີ່ໄດ້ເສຍສະຫຼະຊີວິດ, ເລືອດເນື້ອ ເພື່ອພາລະກິດປະຕິວັດຢ່າງອົງອາດກ້າຫານ ພາຍໃຕ້ການນຳພາ-ຊີ້ນຳ ຂອງພັກປະຊາຊົນ ປະຕິວັດລາວ ຈຶ່ງສາມາດຍາດໄດ້ໄຊຊະນະອັນໃຫຍ່ຫຼວງ ແລະ ປະກາດເອກະລາດ, ສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ2ທັນວາ1975.

ພາຍຫຼັງສຳເລັດການວາງພວງມາລາ, ການນຳພັກ-ລັດ ໄດ້ສືບຕໍ່ເຂົ້າວາງກະຕ່າດອກໄມ້ ຢູ່ຕໍ່ໜ້າຮູບປັ້ນຫຼໍ່ຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ ຢູ່ຫໍພິພິທະພັນ ປະທານ ໄກສອນ ພົມວິຫານ ເພື່ອສະແດງຄວາມກະຕັນຍູຮູ້ບຸນຄຸນຕໍ່ປະທານ ໄກສອນ ພົມວິຫານ ທີ່ໄດ້ເສຍ

ອ່ານຕໍ່ໜ້າ 4

## ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດລາວ ສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ IPU ຄັ້ງທີ 146

(ສພຊ) ໃນລະຫວ່າງວັນທີ 11-15 ມີນາ 2023 ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 146, ທີ່ມານາມາ ປະເທດບາເຣນ ໂດຍການເປັນປະທານຂອງ

ອ່ານໜ້າ 4



## ກຳມາທິການຍຸຕິທຳ ຫາລືວຽກງານຮ່ວມກັບ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ

(ສພຊ) ເພື່ອເປັນການສືບຕໍ່ປຶກສາຫາລືສອງເນື້ອໃນວຽກງານທີ່ສຳຄັນຄື: ວຽກການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ເຊິ່ງຈະໄດ້ຮັບຟັງການລາຍງານຄືນຄວາມຄືບໜ້າ ກ່ຽວກັບການກະກຽມຄວາມພ້ອມໃນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ; ວຽກການກະກຽມຄວາມພ້ອມໃຫ້ແກ່ການຈັດກອງປະຊຸມເຜີຍ



ແຜ່ຄຳແນະນຳ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ (ຮູບແບບອອນລາຍທົ່ວປະເທດ) ແລະ ແຈ້ງຜົນການຕິກ

ອ່ານຕໍ່ໜ້າ 4

## ສະຫຼຸບວຽກງານປ້ອງກັນພາຍໃນ ແລະ ການປ້ອງກັນຕົວ ຂອງສະພາແຫ່ງຊາດ ຊຸດທີ IX ປະຈຳປີ 2022



(ສພຊ) ໃນວັນທີ 22 ມີນາ2023ທີ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ໄດ້ມີກອງປະຊຸມສະຫຼຸບວຽກງານປ້ອງກັນພາຍໃນ ແລະ ການປ້ອງກັນຕົວ ຂອງສະພາແຫ່ງຊາດ ຊຸດທີ IX ປະຈຳປີ 2022 ແລະ ທິດທາງແຜນການປີ 2023 ໂດຍການເປັນປະທານກອງປະຊຸມຂອງສະຫາຍ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ຫົວໜ້າຄະນະປ້ອງກັນພາຍໃນ; ມີສະຫາຍປະທານ-ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ບັນດາສະ

ອ່ານຕໍ່ໜ້າ 4

## ປະທານ ກສຕສ ຢ້ຽມຢາມເຂດພັດທະນາກວມລວມໄຊເສດຖາ



(ສພຊ) ວັນທີ 22 ມີນາຜ່ານມາ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມເຂດພັດທະນາກວມລວມໄຊເສດຖາ ໂດຍໄດ້ຮັບການຕ້ອນຮັບຈາກທ່ານ

ອ່ານຕໍ່ໜ້າ 3



### ສສຊ ເຄື່ອນໄຫວ...

ອ່ານຕໍ່ໜ້າ 5



### ທວນຄືນມູນເຊື້ອ...

ອ່ານຕໍ່ໜ້າ 6



### ເຜີຍແຜ່ຜົນສຳເລັດ...

ອ່ານຕໍ່ໜ້າ 7

# ຝຶກອົບຮົມພາຍໃຕ້ຫົວຂໍ້ “ປະສິດທິພາບຄວາມເປັນພາວະຜູ້ນໍາ ສໍາລັບຜູ້ນໍາຮຸ່ນສືບທອດ”



(ສພຊ) ໃນລະຫວ່າງ ວັນທີ 13-14 ມີນາ 2023 ທີ່ເມືອງວັງວຽງ ແຂວງວຽງຈັນ, ກໍາມາທິການການຕ່າງປະເທດ ສະພາແຫ່ງຊາດ ຮ່ວມກັບສະຖານເອກອັກຄະລັດຖະທູດອົດສະຕຣາລີປະຈໍາສປປລາວແລະ ສະຖາບັນ ລາວ-ອົດສະຕຣາລີ ໄດ້ຈັດກອງປະຊຸມຝຶກອົບຮົມພາຍໃຕ້ຫົວຂໍ້ “ປະສິດທິພາບຄວາມເປັນພາວະຜູ້ນໍາ ສໍາລັບຜູ້ນໍາຮຸ່ນສືບທອດ (Effective Leadership Training) ໃຫ້ແກ່ພະນັກງານການນໍາຂັ້ນກົມ ແລະ ຂັ້ນພະແນກ ຂອງສະພາແຫ່ງຊາດ ແຫ່ງ ສປປລາວ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກໍາມາທິການການຕ່າງປະເທດ ສະພາແຫ່ງຊາດ ແລະ ທ່ານ ແມັດທິວ ແບງສ໌ ເລຂາເອກສະຖານເອກອັກຄະລັດຖະທູດອົດສະຕຣາລີປະຈໍາ ສປປລາວ, ມີບັນດາຄະນະກົມ, ຄະນະພະແນກຈາກບັນດາກໍາມາທິການ, ເລຂາທິການສະພາແຫ່ງຊາດ ແລະ ເລຂາທິການສະພາປະຊາຊົນແຂວງວຽງຈັນ ເຂົ້າຮ່ວມທັງໝົດ 32 ທ່ານ, ຍິງ 17 ທ່ານ.

ທັງນີ້, ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານການນໍາຂັ້ນກົມພາຍໃນສະພາແຫ່ງຊາດ ໃນການຍົກສູງຄວາມຮູ້ຄວາມສາມາດ ໃນການບໍລິຫານຄຸ້ມຄອງນໍາພາການປະຕິບັດໜ້າທີ່ວຽກງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ, ພ້ອມທັງເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມາແຕ່ດົນນານ ລະຫວ່າງ ສປປລາວ ແລະ ປະເທດອົດສະຕຣາລີ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງຂຶ້ນ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມ ຍັງໄດ້ຮັບຮູ້ ແລະ ຮຽນຮູ້ຄວາມຮູ້ໃໝ່ໆທີ່ນັກວິທະຍາກອນໄດ້ນໍາມາຖ່າຍທອດໃນກອງປະຊຸມ ເປັນຕົ້ນ ຄວາມແຕກຕ່າງລະຫວ່າງພາວະຄວາມເປັນຜູ້ນໍາ ແລະ ການບໍລິຫານຈັດການ, ຄວາມສະຫຼາດທາງອາລົມຈິດ (Emotional Intelligence or EQ), ທິດສະດີຄວາມຕ້ອງການຂອງມະນຸດ, ຄວາມແຕກຕ່າງລະຫວ່າງປະສິດທິພາບ ແລະ ປະສິດທິຜົນ ແລະ ພຶດຕິກໍາທີ່ເປັນແບບຢ່າງ ຂອງພາວະຄວາມເປັນຜູ້ນໍາ.

ພາຍຫຼັງໄດ້ຮັບຟັງການນໍາສະເໜີບົດຮຽນຈາກວິທະຍາກອນທີ່ມີຄວາມຮູ້ຄວາມສາມາດ ແລະ ມີປະສົບການ ແລ້ວຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ມີການແບ່ງກຸ່ມເຮັດກິດຈະກໍາຕ່າງໆ ຕາມຫົວຂໍ້ທີ່ກໍານົດ ແລະ ໄດ້ລົງເລິກສົນທະນາ, ປຶກສາຫາລື, ແລກປ່ຽນບົດຮຽນ ແລະ ຝຶກຫັດເຮັດຕົວຈິງຮ່ວມກັນ ເພື່ອນໍາເອົາບົດຮຽນຂອງກອງປະຊຸມຄັ້ງນີ້ໄປໝູນໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂັ້ນນໍາພາຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ, ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຕົວຈິງ ໃນໄລຍະໃໝ່ຂອງບັນດາກໍາມາທິການພາຍໃນສະພາແຫ່ງຊາດ.

ໃນຕອນທ້າຍຂອງກອງປະຊຸມ, ບັນດານັກສໍາມະນາກອນ ຍັງໄດ້ຮັບໃບຢັ້ງຢືນການເຂົ້າຮ່ວມກອງປະຊຸມຝຶກອົບຮົມດັ່ງກ່າວອີກດ້ວຍ.

# ກອງທຶນຊ່ວຍເຫຼືອສັງຄົມ ສະພາແຫ່ງຊາດ ມອບເຄື່ອງຊ່ວຍເຫຼືອ ໃຫ້ສູນການແພດຟື້ນຟູໜ້າທີ່ການ




(ສພຊ) ເພື່ອເປັນການອໍານວຍຄວາມສະດວກໃນການປະຕິບັດໜ້າທີ່ວຽກງານຂອງບັນດາພະນັກງານແພດໝໍ ແລະ ຢ້ຽມຢາມໂອ້ລົມໃຫ້ກໍາລັງໃຈໃຫ້ແກ່ຜູ້ທີ່ປະຕິບັດວຽກງານດັ່ງກ່າວ ໃນວັນທີ 17 ມີນາຜ່ານມາ, ກອງທຶນຊ່ວຍເຫຼືອສັງຄົມ ສະພາແຫ່ງຊາດ ຮ່ວມກັບກໍາມະການຕ້ານ ສະກັດກັ້ນ ແລະ ຮັບມືໄພພິບັດຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ມູນນິທິຊ່ວຍເຫຼືອຄົນທຸກຍາກສາຂານະຄອນຫຼວງວຽງຈັນ ນໍາໂດຍທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມ ແລະ ມອບເຄື່ອງອຸປະກອນການ ແພດໃຫ້ສູນການແພດຟື້ນຟູໜ້າທີ່ການ ກະຊວງສາທາລະນະສຸກ ໂດຍການຕ້ອນຮັບຂອງທ່ານ ດຣ. ທອງເພັດ ສິດທິວັນ ຫົວໜ້າສູນການແພດຟື້ນຟູໜ້າທີ່ການ ມີພະອາຈານ ປອ. ພົງສະຫວັນ ອານຸສິນ ປະທານທີ່ປຶກສາກໍາມະການຕ້ານ, ສະກັດກັ້ນ ແລະ ຮັບມືໄພພິບັດຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ພະນັກງານພາຍໃນສູນການແພດຟື້ນຟູໜ້າທີ່ການ ກະຊວງສາທາລະນະສຸກເຂົ້າຮ່ວມ.

ໃນໂອກາດດັ່ງກ່າວ, ຄະນະ ໄດ້ຮັບຟັງການກ່າວຕ້ອນຮັບ ແລະ ລາຍງານວຽກງານການແພດຟື້ນຟູໜ້າທີ່ການ ແລະ ພາລະບົດບາດຂອງສູນ; ຈາກນັ້ນ, ທ່ານ ດຣ. ນາງ ວິພາວັນ ພົມວິຫານ ໄດ້ມີຄໍາເຫັນ ແລະ ກ່າວມອບອຸປະກອນການແພດ ແລະ ທ່ານ ດຣ. ທອງເພັດ ສິດທິວັນ ມີຄໍາເຫັນກ່າວຮັບເຄື່ອງອຸປະກອນດັ່ງກ່າວ.

ອຸປະກອນການແພດທີ່ນໍາມາມອບໃນຄັ້ງນີ້ ລວມມູນຄ່າທັງໝົດ 350 ລ້ານກີບ ຈາກນັ້ນ, ຄະນະກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ ຍັງໄດ້ສືບຕໍ່ຢ້ຽມຢາມ ແລະ ເຮັດວຽກຮ່ວມກັບຄະນະ ປະທານບໍລິຫານງານໂຮງໝໍກະເສມລາດ ເຊິ່ງໄດ້ຮັບການຕ້ອນຮັບຈາກທ່ານ ດຣ. ນາງ ວາລີ ເວດສະພົງ ສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ປະທານຜູ້ບໍລິຫານໂຮງໝໍກະເສມລາດ ພ້ອມດ້ວຍຄະນະ.

(ສອນສັກ ວັນວິໄຊ)

# ເລື່ອງເດັ່ນ ຂ່າວເດັດ

# ຄັດໂດຍ: ທອມສະນິດ

❒ ຕາມບົດລາຍງານຂອງອົງການສະຫະປະຊາຊາດສະບັບຫຼ້າສຸດ ໃຫ້ຮູ້ວ່າ: ຈາກປີ 2000-2020 ຕົວເລກການເສຍຊີວິດຂອງແມ່ຍິງ ໃນລະຫວ່າງການເກີດລູກ ຢູ່ ສປປລາວ ໄດ້ຫຼຸດລົງເຖິງ 78,7% ເຊິ່ງເປັນໜຶ່ງໃນປະເທດທີ່ມີອັດຕາການຫຼຸດລົງທີ່ໄວທີ່ສຸດໃນໂລກ. ໃນບົດລາຍງານໄດ້ຄາດຄະເນຕົວເລກການເສຍຊີວິດຂອງແມ່ຫຼຸດລົງຈາກ 579 ຄົນ ຕໍ່ການເກີດ 100.000 ຄັ້ງ ໃນປີ 2000 ລົງມາຢູ່ທີ່ 126 ຄົນ ໃນປີ 2020.

**ໜສພ. ປະເທດລາວ 23/03/2023**

❒ ມອບ-ໂອນ 12 ຫົວໜ່ວຍວິສາຫະກິດໃຫ້ແຂວງຫຼວງພະບາງ ຄຸ້ມຄອງໃນໄລຍະທົດລອງ ໂດຍປະຕິບັດຕາມມາດຕາ 3 ຂໍ້ທີ 1 ຂອງມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 63/ສພຊ, ລົງວັນທີ 9 ທັນວາ 2022 ກະຊວງການເງິນ ແລະ ແຂວງຫຼວງພະບາງ ເຫັນດີເປັນເອກະພາບມອບ-ຮັບການທົດລອງຫັນຫົວໜ່ວຍວິສາຫະກິດທີ່ສູນກາງຄຸ້ມຄອງໃນໄລຍະຜ່ານມາ ໃຫ້ແຂວງຫຼວງພະບາງ ສືບຕໍ່ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃນປີ 2023 ຈໍານວນ 12 ຫົວໜ່ວຍທຸລະກິດ ເພື່ອໃຫ້ກາຍເປັນແຂວງເກີນດຸນດ້ານງົບປະມານ (ລາຍຮັບກຸ້ມລາຍຈ່າຍ ແລະ ມີສ່ວນເຫຼືອດຸນດ່ຽງໃຫ້ສູນກາງ).

**ໜພສ. ວຽງຈັນໃໝ່ 23/03/2023**

❒ ກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກໍາ ແລະ ປ່າໄມ້ ອອກແຈ້ງການສະບັບເລກທີ 0697/ກລບ, ລົງວັນທີ 17 ມີນາ 2023 ວ່າດ້ວຍແຈ້ງການໂຈະອະນຸຍາດນໍາເຂົ້າ, ສົ່ງຜ່ານໝູມີຊີວິດ ແລະ ຜະລິດຕະພັນໝູ ຈາກ ສສ.ຫວຽດນາມ ແລະ ປະເທດທີ່ມີການລະບາດຂອງເຊື້ອພະຍາດອະຫິວາໝູອາຟຣິກາ ໂດຍອີງໃສ່ແຈ້ງການຂອງອົງການສຸຂະພາບສັດສາກົນ (OIE) ແລະ ບົດລາຍງານກ່ຽວກັບການລະບາດຂອງພະຍາດອະຫິວາໝູ່ອາຟຣິກາ (African swinefever) ຂອງອົງການອາຫານ ແລະ ການກະເສດ (FAO) ຄັ້ງວັນທີ 16 ມີນາ 2023 ແຈ້ງໃຫ້ຮູ້ວ່າ: ປັດຈຸບັນໄດ້ມີການລະບາດຂອງພະຍາດອະຫິວາໝູອາຟຣິກາ ຢູ່ຫຼາຍປະເທດ ໂດຍສະເພາະແມ່ນມີການລະບາດຢູ່ສສ.ຫວຽດນາມ ແລະ ລາຊະອານາຈັກໄທ ເພື່ອເປັນການປ້ອງກັນ ແລະ ສະກັດກັ້ນການລະບາດບໍ່ໃຫ້ແຜ່ລາມເຂົ້າມາສູ່ ສປປລາວ.

**ໜສພ. ປະເທດລາວ 23/03/2023**

# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ຕໍ່ຈາກສະບັບກ່ອນ...

6) ສືບຕໍ່ເຄື່ອນໄຫວວຽກງານການຕ່າງປະເທດ ໃຫ້ສອດຄ່ອງກັບແນວທາງການຕ່າງປະເທດຂອງພັກ, ປະກອບສ່ວນຍົກສູງບົດບາດຂອງສະພາແຫ່ງຊາດ ໃນເວທີພາກພື້ນ ແລະ ສາກົນ.

ຂ. ທິດທາງ ແລະ ວຽກງານຈຸດສຸມແຕ່ລະດ້ານ

1. ວຽກງານນິຕິບັນຍັດ

1) ກະກຽມບັນດາຮ່າງກົດໝາຍ ຈຳນວນ 25 ສະບັບ. ໃນນີ້, ກົດໝາຍສ້າງໃໝ່ ຈຳນວນ 9 ສະບັບ ແລະ ກົດໝາຍປັບປຸງ ຈຳນວນ 16 ສະບັບ ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມກອງປະຊຸມສະໄໝສາມັນເທື່ອທີ 5 ແລະ ເທື່ອ 6 ຂອງສະພາແຫ່ງຊາດ ຊຸດທີ IX; ຊີ້ນຳການປັບປຸງ ແລະ ຮຽບຮຽງບັນດາກົດໝາຍ ຈຳນວນ 12 ສະບັບ ທີ່ໄດ້ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອສະເໜີຂໍການພິຈາລະນາປະກາດໃຊ້;

2) ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ ໃຫ້ບັນລຸຕາມແຜນການທີ່ວາງໄວ້ ທັງຮັບປະກັນສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ, ຖືກຕ້ອງຕາມຂັ້ນຕອນ ແລະ ທັນເວລາທີ່ກົດໝາຍກຳນົດ ໂດຍສະເພາະ ການປະກາດໃຊ້ກົດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວ;

3) ຄົ້ນຄວ້າ ແລະ ປັບປຸງກົດໝາຍຂົງເຂດວຽກງານຂອງສະພາແຫ່ງຊາດ ລວມທັງການອອກນິຕິກຳໃຕ້ກົດໝາຍທີ່ຕິດພັນກັບວຽກງານຂອງສະພາແຫ່ງຊາດ; ຊີ້ນຳການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຊຸກຍູ້ການຜັນຂະຫຍາຍເນື້ອໃນຂອງກົດໝາຍ ທີ່ສະພາແຫ່ງຊາດຮັບຮອງເພື່ອມອບໃຫ້ບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ ອອກເປັນນິຕິກຳໃຕ້ກົດໝາຍໃຫ້ສຳເລັດ;

4) ຄົ້ນຄວ້າການຕີຄວາມໝາຍ ຫຼື ອະທິບາຍລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ, ການໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງລັດຖະບັນຍັດ, ດຳລັດ ແລະ ເອກະສານຕ່າງໆ ຕາມການສະເໜີຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ;

5) ຄົ້ນຄວ້າສ້າງແຜນການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໂດຍສະເພາະ ກົດໝາຍທີ່ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ, ຕິດພັນກັບການດຳລົງຊີວິດຂອງປະຊາຊົນ ເພື່ອຊຸກຍູ້ກະຊວງ, ອົງການ ໃນການຈັດຕັ້ງປະຕິບັດແຕ່ລະໄລຍະ ໃຫ້ບັນລຸຕາມແຜນການດັ່ງກ່າວ.

2. ວຽກງານຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດໃນປີ 2023 ຈະໄດ້ຄົ້ນຄວ້າ, ພິຈາລະນາຮັບຮອງເອົາເນື້ອໃນຕ່າງໆ ຜ່ານກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

2.1 ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ມີເນື້ອໃນຕົ້ນຕໍ:

1) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນງົບປະມານແຫ່ງລັດ 5 ປີ (2021-2025); ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

3) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນເງິນຕາ 5 ປີ (2021-2025); ການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

4) ບົດລາຍງານການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ;

5) ບົດລາຍງານການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງສະພາແຫ່ງຊາດ ຊຸດທີ IX;

6) ບົດລາຍງານການຕິດຕາມກວດກາ ການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ ແລະ ການປັບປຸງລະບົບປະກັນສັງຄົມ ທີ່ມີຄຸນນະພາບ;

7) ພິຈາລະນາ ແລະ ຮັບຮອງເອົາບັນດາຮ່າງກົດໝາຍ ຈຳນວນ 13 ສະບັບ;

8) ລາຍງານ, ຊີ້ແຈງຕໍ່ບັນຫາພົ້ນເດັ່ນໃດໜຶ່ງ ທີ່ເກີດຂຶ້ນໃນສັງຄົມ ຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ສູ້ຊົນແກ້ໄຂບັນດາຄະດີທີ່ແກ່ຍາວກັບບັນດາພາກສ່ວນກ່ຽວຂ້ອງ ເພື່ອຫຼຸດຜ່ອນຂະບວນການຄຳຮ້ອງຂໍຄວາມເປັນທຳແບບຫຼີ້ນໄປຫຼີ້ນມາຫຼາຍຄັ້ງ;

9) ຈັດຕັ້ງການປະເມີນຜົນດ້ວຍການລົງຄະແນນສຽງ ຫຼື ດ້ວຍການໃຫ້ຄະແນນໄວ້ວາງໃຈ ໃນການປະຕິ ບັດໜ້າທີ່ວຽກງານຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ລວມທັງຈັດຕັ້ງການໃຫ້ຄະແນນຕໍ່ເປົ້າໝາຍທີ່ລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມຢູ່ກອງປະຊຸມສະພາແຫ່ງຊາດ;

10) ການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຍຸຕິທຳ.

2.2 ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ມີເນື້ອໃນຕົ້ນຕໍ:

1) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024;

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ, ແຜນເງິນຕາ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024;

3) ບົດລາຍງານຂອງລັດຖະບານ ກ່ຽວກັບຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ;

4) ບົດລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 17/ສພຊ, ລົງວັນທີ 25 ມິຖຸນາ 2019 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການພັດທະນາຊັບພະຍາກອນມະນຸດ ຕາມຂະແໜງການບູລິມະສິດ ໃນສາຂາວິຊາກະສິກຳ, ຄູ ແລະ ພະຍາບານ;

5) ບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ;

6) ບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022;

7) ບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2021;

8) ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສະພາແຫ່ງຊາດ;

9) ບົດປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ;

10) ພິຈາລະນາ ແລະ ຮັບຮອງເອົາບັນດາຮ່າງກົດໝາຍ ຈຳນວນ 12 ສະບັບ;

11) ຈັດຕັ້ງການໃຫ້ຄະແນນຕໍ່ເປົ້າໝາຍທີ່ລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມຢູ່ກອງປະຊຸມສະພາແຫ່ງຊາດ;

12) ການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

3.3 ເອົາໃຈໃສ່ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອຮັບປະກັນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ສອດຄ່ອງກັບສະພາບຕົວຈິງແຕ່ລະໄລຍະ ຕິດພັນກັບແຜນວຽກຈຸດສຸມຂອງສະພາແຫ່ງຊາດ.

3. ວຽກງານຕິດຕາມກວດກາ

ການຕິດຕາມກວດກາຂອງສະພາແຫ່ງຊາດ ໃນປີ 2023 ຈະໄດ້ສຸມໃສ່ວຽກງານຕົ້ນຕໍ ດັ່ງນີ້:

1) ຕິດຕາມກວດກາ ດ້ວຍການຮັບຟັງລາຍງານຂອງລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຢູ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ລວມທັງການຊັກຖາມ ແລະ ຊີ້ແຈງ ຕໍ່ບັນຫາພົ້ນເດັ່ນຂອງສັງຄົມ;

ອ່ານຕໍ່ສະບັບໜ້າ...

## ປະທານ...

(ຕໍ່ຈາກໜ້າ 1)

ຊົງຈູນ ຜູ້ອຳນວຍການບໍລິສັດຮ່ວມທຶນ ລາວ-ຈີນ ຈຳກັດ.

ຈຸດປະສົງ ກໍເພື່ອເປັນການຢ້ຽມຢາມ, ແລກປ່ຽນຄຳຄິດຄຳເຫັນ ແລະ ທັດສະນະກ່ຽວກັບການພັດທະນາເຂດພັດທະນາກວມລວມໄຊເສດຖາ; ລົງເກັບກຳຂໍ້ມູນຕົວຈິງກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍຂອງບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ຫົວໜ່ວຍທຸລະກິດຕ່າງໆ ຢູ່ເຂດພັດທະນາກວມລວມໄຊເສດຖາ; ຕິດຕາມຊຸກຍູ້ການແກ້ໄຂຄວາມຫຍຸ້ງຍາກ ໃນການນຳເຂົ້າ-ສົ່ງອອກສິນຄ້າຂອງຫົວໜ່ວຍການຜະລິດ ໃນເຂດພັດທະນາດັ່ງກ່າວ ໃຫ້ຖືກຕ້ອງຕາມກົດໝາຍ, ມີປະສິດທິພາບ ເພື່ອເປັນຂໍ້ມູນ ແລະ ບ່ອນອີງໃນການລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ.

ໃນໂອກາດດັ່ງກ່າວ, ຄະນະ ໄດ້ຮັບຟັງການສະເໜີກ່ຽວກັບການພັດທະນາເຂດພັດທະນາກວມລວມໄຊເສດຖາ ໃນໄລຍະຜ່ານມາ ຈົນເຖິງປັດຈຸບັນ ແລະ ສົນທະນາແລກປ່ຽນຄຳເຫັນ ລະຫວ່າງ ຄະນະຜູ້ນຳ, ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເສດຖະກິດພິເສດແລະບໍລິສັດ ຮ່ວມທຶນ ລາວ-ຈີນ ຈຳກັດ; ຈາກນັ້ນ, ທ່ານປະທານ ກສຕສ ຍັງໄດ້ມີຄຳເຫັນໂອ້ລົມເພື່ອໃຫ້ທິດຊີ້ນຳ.

## ວາງພວງມາລາ...

(ຕໍ່ຈາກໜ້າ 1)

ສະຫຼະເຫື່ອແຮງ, ສຸມສະຕິປັນຍາ ເຂົ້າໃນການນຳພາ-ຊີ້ນຳພາລະກິດປະຕິວັດ ຕໍ່ສູ້ຕ້ານການຮຸກຮານຂອງພວກຈັກກະພັດລ່າເມືອງຂຶ້ນ, ສາມາດຍາດໄດ້ໄຊຊະນະ ແລະ ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ. ພາຍຫຼັງສະຖາປານາ ສປປລາວ, ເພິ່ນຍັງເປັນຜູ້ນຳທີ່ມີແນວຄິດລິເລີ່ມ ແລະ ຊອກຫາແນວທາງການປ່ຽນແປງໃໝ່ ເຊິ່ງໄດ້ນຳເອົາຄວາມຢູ່ເຢັນເປັນສຸກມາສູ່ປະຊາຊົນລາວບັນດາເຜົ່າ. ຜົນງານ ແລະ ຄຸນງາມຄວາມດີຂອງເພິ່ນແມ່ນໃຫຍ່ຫຼວງທີ່ສຸດ ເພິ່ນໄດ້ກາຍເປັນຕົວແທນລວມຍອດແຫ່ງຄວາມຮັກຊາດ ແລະ ເປັນສັນຍະລັກແຫ່ງຊາດລາວວິລະຊົນ, ຄົນລາວພິລະອາດຫານ ເຊິ່ງຜົນງານ ແລະ ຄຸນງາມຄວາມດີຂອງເພິ່ນ ໄດ້ຈາລຶກໃນຄວາມຊົງຈຳຂອງປະຊາຊົນລາວບັນດາເຜົ່າຕະຫຼອດໄປ.

(ແຫຼ່ງຂ່າວ: ປະຊາຊົນ)

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ທ່ານ ອາເມດ ບິນ ຊາລມານ ອານ ມູຊາລຳ ປະທານລັດຖະສະພາລາຊະອານາຈັກບາເຣນ. ກອງປະຊຸມດັ່ງກ່າວ, ມີຄະນະຜູ້ແທນຫຼາຍກວ່າ 2.000 ທ່ານ ທີ່ມາຈາກ 140 ປະເທດ ທີ່ເປັນສະມາຊິກ IPU, ອົງການສະຫະປະຊາຊາດ ແລະ ຕົວແທນຈາກອົງການລັດຖະສະພາປະຈຳພາກພື້ນຕ່າງໆທົ່ວໂລກ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ດຳເນີນໄປພາຍໃຕ້ຫົວຂໍ້: “ສົ່ງເສີມການຢູ່ຮ່ວມກັນຢ່າງສັນຕິ ແລະ ສັງຄົມທີ່ກວມລວມ: ຕ້ານທຸກການກະທຳທີ່ຂາດຄວາມອົດທົນອົດກັ້ນ”. ໃນກອງປະຊຸມບັນດາຜູ້ແທນຈາກປະເທດຕ່າງໆ ໄດ້ປະກອບຄຳເຫັນຢ່າງຫຼາກຫຼາຍ ໂດຍຍົກໃຫ້ເຫັນບົດຮຽນປະເທດຂອງຕົນຕາມຫົວຂໍ້ຂອງກອງປະຊຸມເປັນຕົ້ນແມ່ນປຶກສາຫາລືກ່ຽວກັບຄວາມຈຳເປັນໃນການສົ່ງເສີມສັນຕິພາບ ແລະ ການຮ່ວມມື, ໃຫ້ມີຄວາມອົດທົນອົດກັ້ນ, ແກ້ໄຂບັນຫາໂດຍສັນຕິວິທີ; ປຶກສາຫາລືກ່ຽວກັບບັນຫາຄວາມໝັ້ນຄົງ, ເສດຖະກິດສັງຄົມ, ສິດທິມະນຸດ, ປະຊາທິປະໄຕ ແລະ ພິຈາລະນາບັນຫາຮີບດ່ວນ ທີ່ເປັນຄວາມກັງວົນຮ່ວມກັນໃນທົ່ວໂລກ ລວມທັງບັນຫາການປ່ຽນແປງດິນຟ້າອາກາດ ກໍຄື ການປ້ອງກັນການໂຈມຕີທາງໄຊເບີ ແລະ ອາດຊະຍາກຳທາງຄອມພິວເຕີ, ການບັນລຸຄວາມດຸນດ່ຽງຂອງທາດກາກບອນລົບຈາກປ່າໄມ້ ແລະ ອື່ນໆ.

ໃນກອງປະຊຸມໃຫຍ່ໄອພີຢູຄັ້ງທີ 146 ນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຫົວໜ້າຄະນະຜູ້ແທນລາວ ໄດ້ຂຶ້ນກ່າວປາໄສ ພາຍໃຕ້ຫົວຂໍ້: “ສົ່ງເສີມການຢູ່ຮ່ວມກັນຢ່າງສັນຕິ ແລະ ສັງຄົມທີ່ກວມລວມ: ຕ້ານທຸກການກະທຳທີ່ຂາດຄວາມອົດທົນອົດກັ້ນ” ເຊິ່ງທ່ານໄດ້ຍົກໃຫ້ເຫັນເຖິງສິ່ງທ້າທາຍຫຼາຍຢ່າງທີ່ສົ່ງຜົນກະທົບອັນຮ້າຍແຮງຕໍ່ການພັດທະນາເສດຖະກິດ-ສັງຄົມ, ການປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ ແລະ ໃນທົ່ວໂລກ, ພ້ອມທັງຕີລາຄາສູງຕໍ່ບົດບາດຂອງ IPU ກໍຄື ລັດຖະສະພາສະມາຊິກ ໃນການສືບຕໍ່ສົ່ງເສີມການພົວພັນຮ່ວມມືເພື່ອການພັດທະນາ, ເພີ່ມທະວີການທູດລັດຖະສະພາ ເພື່ອສ້າງຄວາມເຊື່ອໝັ້ນ ແລະ ຄວາມເຂົ້າໃຈເຊິ່ງກັນແລະກັນ, ສົ່ງເສີມການຮ່ວມມືແບບຫຼາຍຝ່າຍ ທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ຊຸກຍູ້ການແກ້ໄຂບັນຫາຕ່າງໆຢ່າງສັນຕິວິທີ ບົນພື້ນຖານການຍຶດໝັ້ນຫຼັກການ ແລະ ລະບຽບການສາກົນ; ພ້ອມດຽວກັນນັ້ນ, ທ່ານຍັງໄດ້ຍົກໃຫ້ເຫັນເຖິງຄວາມພະຍາຍາມຂອງ ສປປລາວ ກໍຄື ສະພາແຫ່ງຊາດລາວ ໃນການດຳເນີນນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ, ເພີ່ມທະວີການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ໂດຍໄດ້ຮັບຮອງເອົາກົດໝາຍຫຼາຍສະບັບທີ່ສອດຄ່ອງກັບຫຼັກການສາກົນ ແລະ ຄວາມເປັນຈິງຂອງປະເທດ, ພ້ອມທັງໄດ້ພິຈາລະນາໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນຫຼາຍສະບັບ ທີ່ ສປປລາວ ເປັນພາຄີ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມສ້າງສັນຕິພາບ, ຄວາມໝັ້ນຄົງ, ການພັດທະນາ ແລະ ຄວາມເປັນຢູ່ທີ່ດີຂອງປະຊາຊົນໃນພາກພື້ນ ແລະ ໃນໂລກ. ໃນຕອນທ້າຍ, ທ່ານຮອງປະທານສະພາແຫ່ງຊາດລາວ ຍັງໄດ້ຮຽກຮ້ອງໃຫ້ສະມາຊິກສະຫະພັນລັດຖະສະພາສາກົນ (IPU) ເພີ່ມທະວີການຊຸກຍູ້ສົ່ງເສີມການສ້າງຄວາມສາມັກຄີປອງດອງ, ຍົກສູງການຮ່ວມມືແບບພະຫຸພາຄີ, ສົ່ງເສີມການແກ້ໄຂຂໍ້ຂັດແຍ່ງຕ່າງໆຢ່າງສັນຕິວິທີ ໂດຍຜ່ານການເຈລະຈາ, ຍຶດໝັ້ນຫຼັກການ ແລະ ລະບຽບການສາກົນ ເພື່ອສົ່ງເສີມ ສັນຕິພາບ, ສະຖຽນລະພາບ, ການຢູ່ຮ່ວມກັນຢ່າງສັນຕິ ແລະ ສະເໝີພາບກັນໃນສັງຄົມ ແນໃສ່ນຳເອົາຄວາມຈະເລີນຮຸ່ງເຮືອງ ວັດທະນາຖາວອນມາສູ່ປະຊາຊາດໃນທົ່ວໂລກ.

ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວຍັງໄດ້ເຂົ້າຮ່ວມ ແລະ ປະກອບຄຳເຫັນ ໃນກອງປະຊຸມສະພາບໍລິຫານງານ IPU, ກອງປະຊຸມເວທີປຶກສາຫາລືວຽກງານສະມາຊິກລັດຖະສະພາເພດຍິງ, ກອງປະຊຸມເຄືອຂ່າຍລັດຖະສະພາ ຂອງບັນດາປະເທດສະມາຊິກຂະບວນການບໍ່ຮ່ວມກຸ່ມ ຄັ້ງທີ 2 ແລະ ພົບປະສອງຝ່າຍກັບຄະນະຜູ້ແທນຈາກລັດຖະສະພາປະເທດເພື່ອນມິດ, ອົງການລັດຖະສະພາພາກພື້ນແລະສາກົນຕ່າງໆ ເຊັ່ນ: ສສ.ຫວຽດນາມ, ມົງໂກລີ, ສະຫະພັນຣັດເຊຍ, ເບລາຣຸສ, ຈໍເຈຍ, ອິນເດຍ, ອົດສະຕຣາລີ, ມາດາກາສກາ, ອັງໂກລາ, ເລຂາທິການໃຫຍ່ IPU ແລະ ຜູ້ແທນປະເທດອື່ນໆອີກຈຳນວນໜຶ່ງ ເພື່ອປຶກສາຫາລືກ່ຽວກັບການພົວພັນຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍໃນຂອບອົງການນິຕິບັນຍັດ ໃນຕໍ່ໜ້າ.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນໄປໃນບັນຍາກາດ ທີ່ທຸກຝ່າຍເຫັນດີເປັນເອກະພາບສືບຕໍ່ຮ່ວມມືໃນພາກພື້ນ ແລະ ສາກົນ ໂດຍໄດ້ມີການຮັບຮອງເອົາມະຕິໃນຂົງເຂດວຽກງານຕ່າງໆຮ່ວມກັນ ຈຳນວນຫຼາຍສະບັບ ໂດຍສະເພາະມະຕິວ່າດ້ວຍການປູກຈິດສຳນຶກ ແລະ ຮຽກຮ້ອງການຊ່ວຍເຫຼືອທາງດ້ານມະນຸດສະທຳ (ກຸ່ມແມ່ຍິງ ແລະ ເດັກນ້ອຍ) ທີ່ໄດ້ຮັບຜົນກະທົບຈາກ ວິກິດການທີ່ເກີດຂຶ້ນຢູ່ໃນປະເທດອັບການິສຖານ, ຊີລີ, ເຢເມນ,ປະເທດໃນອັບຟຣິກກາ, ອາເມຣິກາລາຕິນ, ຢູເຄຣນ ແລະ ບັນດາປະເທດໃນພາກພື້ນຕ່າງໆຂອງໂລກ ເຊິ່ງຄະນະຜູ້ແທນຂອງສະພາແຫ່ງຊາດລາວ ກໍໄດ້ໃຊ້ສິດຢ່າງເຕັມສ່ວນໃນການປະກອບຄຳເຫັນ ແລະ ລົງຄະແນນສຽງໃນວາລະຕ່າງໆ. ກອງປະຊຸມໃຫຍ່ IPU ຄັ້ງຕໍ່ໄປ ຄັ້ງທີ 147 ຈະໄດ້ຈັດຂຶ້ນໃນເດືອນຕຸລາ 2023 ທີ່ປະເທດອັງໂກລາ.

## ກຳມາທິການ...

(ຕໍ່ຈາກໜ້າ 1)

ລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນຄັ້ງວັນທີ 1 ມີນາ 2023 ກ່ຽວກັບການຄົ້ນຄວ້າພິຈາລະນາຂໍ້ຕົກລົງຮ່ວມວ່າດ້ວຍການປະສານງານລະຫວ່າງກຳມາທິການຍຸຕິທຳ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໄດ້ຮັບຊາບ. ໃນວັນທີ 21 ມີນາ 2023 ທີ່ສະພາແຫ່ງຊາດ, ກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ແລະ ນິຕິກຳຮ່ວມວ່າດ້ວຍການປະສານງານ ລະຫວ່າງ ກຳມາທິການຍຸຕິທຳ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ, ຜູ້ຊີ້ນຳວຽກງານກຳມາທິການຍຸຕິທຳ; ມີບັນດາທ່ານປະທານ-ຮອງປະທານກຳມາທິການຍຸຕິທຳ, ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ມີຄະນະກົມ, ຄະນະພະແນກ ພ້ອມດ້ວຍວິຊາການພາຍໃນກຳມາທິການຍຸຕິທຳ ແລະແຂກທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການລາຍງານກ່ຽວກັບການກະກຽມຄວາມພ້ອມໃນດ້ານຕ່າງໆຂອງການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຈາກທ່ານຫົວໜ້າກົມຕິດຕາມກວດກາວຽກງານຍຸຕິທຳ; ລາຍງານຄວາມຄືບໜ້າການປະເມີນກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຈາກຮອງປະທານສານປະຊາຊົນສູງສຸດ; ລາຍງານຄວາມຄືບໜ້າການປະເມີນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຈາກທ່ານຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ລາຍງານກ່ຽວກັບຜົນການຕົກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການພິຈາລະນາຕົກລົງຕໍ່ຮ່າງຂໍ້ຕົກລົງວ່າດ້ວຍການປະສານງານ ລະຫວ່າງກຳມາທິການຍຸຕິທຳ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຈາກທ່ານປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນປຶກສາຫາລືແລກປ່ຽນຄຳຄິດຄຳເຫັນໃສ່ບົດລາຍງານດັ່ງກ່າວ ເພື່ອຖອດຖອນບົດຮຽນເຊິ່ງກັນແລະກັນ.

(ສອນສັກ ວັນວິໄຊ)

## ສະຫຼຸບວຽກງານ...

(ຕໍ່ຈາກໜ້າ 1)

ຫາຍໃນຄະນະປ້ອງກັນພາຍໃນ ແລະ ໜ່ວຍປ້ອງກັນຕົວ ຂອງສະພາແຫ່ງຊາດ, ກອງເລຂາຄະນະປ້ອງກັນພາຍໃນ ແລະ ໜ່ວຍປ້ອງກັນຕົວ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງຈຳນວນໜຶ່ງເຂົ້າຮ່ວມ.

ທັງນີ້, ເພື່ອຈັດຕັ້ງສະຫຼຸບຕີລາຄາການເຄື່ອນໄຫວວຽກງານປ້ອງກັນພາຍໃນແລະການປ້ອງກັນຕົວເອງ ຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ວາງທິດທາງແຜນການວຽກງານ ປີ 2023; ເພື່ອເຮັດໃຫ້ຄະນະພັກ-ຄະນະນຳ, ຄະນະປ້ອງກັນພາຍໃນ ແລະ ໜ່ວຍປ້ອງກັນຕົວ ຂອງສະພາແຫ່ງຊາດ ໄດ້ເຊື່ອມຊຶມ, ກຳແໜ້ນເຖິງຄວາມໝາຍຄວາມສຳຄັນ, ພາລະບົດບາດໜ້າທີ່ ແລະ ເນື້ອໃນຈິດໃຈຕ່າງໆ ທີ່ກ່ຽວພັນເຖິງວຽກງານປ້ອງກັນພາຍໃນໃຫ້ເລິກເຊິ່ງ, ພ້ອມທັງຮູ້ນຳໄປຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ມີປະສິດທິຜົນ ແລະ ເພື່ອເຮັດໃຫ້ວຽກງານປ້ອງກັນພາຍໃນ ຢູ່ພາຍໃນສະພາແຫ່ງຊາດມີຄວາມເຂັ້ມແຂງ, ໜັກແໜ້ນສາມາດສະກັດກັ້ນ, ຕອບໂຕ້ຢ່າງທັນການ ຕໍ່ປາກົດການຫຍໍ້ທໍ້, ເລ່ກົນ ກໍຄືຍຸດທະສາດ “ຫັນປ່ຽນໂດຍສັນຕິຂອງພວກສັດຕູ ແລະ ກຸ່ມຄົນບໍ່ດີ ທີ່ມີຕໍ່ພັກ-ລັດພວກເຮົາ”.

ກອງປະຊຸມ, ໄດ້ຮັບຟັງການຜ່ານບົດສະຫຼຸບການເຄື່ອນໄຫວວຽກງານປ້ອງກັນພາຍໃນ ປະຈຳປີ 2022 ແລະ ແຜນການປີ 2023 ຂອງຄະນະປ້ອງກັນພາຍໃນ ແລະ ໜ່ວຍປ້ອງກັນຕົວ ຂອງສະພາແຫ່ງຊາດ ຊຸດທີ IX; ຈາກນັ້ນ, ຕາງໜ້າກົມ 200 ກະຊວງປ້ອງກັນຄວາມສະຫງົບ ມີຄຳເຫັນແນະນຳກ່ຽວກັບການເຄື່ອນໄຫວວຽກງານປ້ອງກັນພາຍໃນ ແລະ ສະເໜີເອກະສານທີ່ກ່ຽວຂ້ອງຈຳນວນໜຶ່ງ; ຫຼັງຈາກນັ້ນ, ຍັງໄດ້ສະເໜີຜ່ານແຈ້ງການຂອງກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບການຈັດຕັ້ງເຝິກອົບຮົມວຽກງານກັນສະກັດກັ້ນອັກຄີໄພ; ຜ່ານຮ່າງແຜນການເຝິກອົບຮົມກ່ຽວກັບວຽກງານກັນສະກັດກັ້ນ ອັກຄີໄພ; ພ້ອມນັ້ນ, ກອງປະຊຸມຍັງໄດ້ແລກປ່ຽນຄຳຄິດຄຳເຫັນກ່ຽວກັບການເຄື່ອນໄຫວວຽກງານປ້ອງກັນພາຍໃນ ແລະ ການປ້ອງກັນຕົວ.

ໃນຕອນທ້າຍຂອງກອງປະຊຸມ, ສະຫາຍ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນກ່າວປິດກອງປະຊຸມວ່າ: ກອງປະຊຸມໄດ້ຄົ້ນຄວ້າປະກອບຄຳຄິດຄຳເຫັນ ແລະ ຮັບຮອງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງວຽກງານຈຸດສຸມ ປີ 2023 ຂອງຄະນະປ້ອງກັນພາຍໃນ ແລະ ໜ່ວຍປ້ອງກັນຕົວ ຂອງສະພາແຫ່ງຊາດ ຊຸດທີ IX; ພ້ອມກັນນີ້, ຍັງໄດ້ຮັບຟັງການເຜີຍແຜ່ແນະນຳກ່ຽວກັບວຽກງານວິຊາສະເພາະປ້ອງກັນພາຍໃນ ໂດຍພະນັກງານວິຊາສະເພາະປ້ອງກັນພາຍໃນກົມ 200 ກະຊວງປ້ອງກັນຄວາມສະຫງົບ ເຊິ່ງໄດ້ຍົກໃຫ້ເຫັນເຖິງຄວາມໝາຍ, ຄວາມສຳຄັນ, ວິທີເຮັດວຽກ ແລະ ແບບແຜນຕ່າງໆໃນການເຄື່ອນໄຫວວຽກງານປ້ອງກັນພາຍໃນ ແລະ ການປ້ອງກັນຕົວ, ພ້ອມກັນນັ້ນ, ກໍຍັງໄດ້ຍົກໃຫ້ເຫັນເຖິງບັນດາກົນອຸບາຍ ຂອງພວກຄົນບໍ່ດີ ແລະ ປາກົດການຕົວຈິງທີ່ເກີດຂຶ້ນ ແລະ ເປັນບົດຮຽນໃນໄລຍະຜ່ານມາ ເຊິ່ງເປັນຂໍ້ມູນຄວາມຮູ້ທີ່ສຳຄັນ ໃຫ້ແກ່ຄະນະປ້ອງກັນພາຍໃນ ນຳໄປຈັດຕັ້ງປະຕິບັດ ແລະ ໝູນໃຊ້ຢ່າງປະດິດສ້າງ ເຂົ້າໃນສະພາບວຽກງານຕົວຈິງຂອງສະພາແຫ່ງຊາດ; ພ້ອມນັ້ນ, ສະຫາຍ ຍັງໄດ້ຮຽກຮ້ອງໃຫ້ທຸກສະຫາຍ ຈົ່ງເພີ່ມທະວີຄວາມສາມັກຄີເປັນເອກະພາບ, ເຊີດຊູນ້ຳໃຈເປັນເຈົ້າຕົນເອງ, ກຸ້ມຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເຕົ້າໂຮມທຸກກຳລັງແຮງສັງລວມ ສຸມໃສ່ການຈັດຕັ້ງປະຕິບັດໜ້າທີ່ອັນມີກຽດສະຫງ່າໃຫ້ມີຜົນສຳເລັດຢ່າງແຂງແຮງ.

(ນາງ ສຸພາວັນ ທອມສະນິດ)

# ສຳມະນາເຜີຍແຜ່ວຽກງານສະຖິຕິ ໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ 9 ແຂວງ



(ສພຊ) ຕອນເຊົ້າຂອງວັນສຸກທີ 17 ມີນາ 2023 ຢູ່ທີ່ຫ້ອງປະຊຸມອົງການໄອຍະການປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມສຳມະນາເຜີຍແຜ່ວຽກງານສະຖິຕິໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ 9 ແຂວງ ໂດຍການເປັນປະທານຂອງທ່ານ ນາງ ພອນສະຫຼີ ສຸກສະຫວັດ ຫົວໜ້າສູນສະຖິຕິແຫ່ງຊາດ ແລະ ທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງອຸດົມໄຊ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ 9 ແຂວງຄື: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ, ຊຽງຂວາງ ແລະ ວຽງຈັນ, ມີຮອງຫົວໜ້າສູນສະຖິຕິແຫ່ງຊາດ-ຄະນະຮັບຜິດຊອບກອງປະຊຸມ ແລະ ບັນດາແຂກເຊີນອ້ອມຂ້າງແຂວງອຸດົມໄຊ ເຂົ້າຮ່ວມ 55 ທ່ານ ຍິງ 8 ທ່ານ.

ໃນກອງປະຊຸມ, ບັນດາທ່ານຜູ້ແທນເຂົ້າຮ່ວມໄດ້ຮັບຟັງການສະເໜີບັນດາຫົວຂໍ້ ແລະ ເນື້ອໃນຕ່າງໆ ເຊັ່ນ ສະຫຼຸບຜົນກ່ຽວກັບການຈັດຕັ້ງປະຕິບັດວຽກງານສະຖິຕິຮັບໃຊ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (ສະເໜີລວມກ່ຽວກັບການຈັດຕັ້ງລະບົບສະຖິຕິແຫ່ງຊາດ, ບົດບາດ ແລະ ໜ້າທີ່ໃນການຜະລິດ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການ, ຄວາມຕ້ອງການ ແລະ ການສະໜອງຂໍ້ມູນສະຖິຕິທາງການໃນ ສປປລາວ, ແຜນພັດທະນາລະບົບສະຖິຕິແຫ່ງຊາດ ໂດຍສະເພາະແຜນໃນປີ 2023); ການຜະລິດຕົວຊີ້ບອກສະຖິຕິທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຮັບໃຊ້ການຕິດຕາມແລະປະເມີນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ການນຳສະເໜີກ່ຽວກັບລວມຍອດຜະລິດຕະພັນພາຍໃນ, ເງິນເຟີ້, ສະຖິຕິຄວາມທຸກຍາກ; ການນຳໃຊ້ ແລະ ເຜີຍແຜ່ສະຖິຕິທາງການ.

ກອງປະຊຸມໃນຄັ້ງນີ້, ແມ່ນເພື່ອສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ການສົ່ງເສີມການນຳໃຊ້ສະຖິຕິທາງການ, ກະຕຸກຊຸກຍູ້ໃຫ້ສັງຄົມປະກອບສ່ວນຂໍ້ມູນຂ່າວສານສະຖິຕິ, ລະດົມປະຊາຊົນບັນດາເຜົ່າ ເຂົ້າໃນຂະບວນການເກັບກຳຂໍ້ມູນ ເປັນຕົ້ນແມ່ນການສຳຫຼວດພົນລະເມືອງ, ການສຳຫຼວດເສດຖະກິດ, ການສຳຫລວດກະສິກຳ ສາມາດຕອບສະໜອງຂໍ້ມູນເຂົ້າໃນການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສ່ວນໜຶ່ງກໍເປັນການເຜີຍແຜ່ສະຖິຕິທາງການໃຫ້ແກ່ສະມາຊິກສະພາ ກ່ຽວກັບຄຳຖາມຕ່າງໆຈາກກອງປະຊຸມສະພາ ເພື່ອເປັນການຊີ້ແຈງ ແລະ ລົງເລິກແລກປ່ຽນອະທິບາຍ, ເພື່ອຮັບຮູ້ ແລະ ເຂົ້າໃຈຄວາມຫຍຸ້ງຍາກຄວາມທ້າທາຍໃນການເກັບກຳ ແລະ ພັດທະນາຂໍ້ມູນສະຖິຕິໃນລະບົບສະຖິຕິແຫ່ງຊາດ ແລະ ເພື່ອສ້າງຄວາມເຂົ້າໃຈການພັດທະນາທາງດ້ານເສດຖະກິດ, ສະພາບກຳລັງແຮງງານ, ອັດຕາເງິນເຟີ້, ສະຖິຕິພົນລະເມືອງ, ຄວາມຄືບໜ້າໃນການພັດທະນາດ້ານສັງຄົມເຊັ່ນ: ສຶກສາ, ສາທາ ແລະ ອື່ນໆ.

ພ້ອມນັ້ນ, ກອງປະຊຸມຜູ້ແທນໄດ້ມີຄຳເຫັນ ແລະ ປຶກສາຫາລືກັນ ກ່ຽວກັບບັນດາເນື້ອໃນທີ່ນຳສະເໜີ ຢ່າງກົງໄປກົງມາອີກດ້ວຍ.

(ແສງພອນ ອິນນະລົງ)

# ສະຫຼຸບຖອດຖອນບົດຮຽນການກະກຽມ ແລະ ດຳເນີນ 5 ກອງປະຊຸມ



(ສພຊ) ວັນທີ 10 ມີນາ 2023 ສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມຖອດຖອນບົດຮຽນກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງ 3 ຄະນະກຳມະການ, ກອງປະຊຸມປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8, ປະທານສະພາປະຊາຊົນແຂວງຫົວພັນ; ມີບັນດາຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫຼຸບຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມຄົບ ປະຈຳປີ 2022 ຂອງ 3 ຄະນະກຳມະການ, ກອງປະຊຸມປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຈາກທ່ານ ສຸກມີໄຊ ສິງບຸນເຮືອງ ຮອງເລຂາທິການສະພາປະຊາຊົນແຂວງ ເຊິ່ງເນື້ອໃນບົດສະຫຼຸບໄດ້ຍົກໃຫ້ເຫັນດ້ານດີຜົນງານ, ດ້ານອ່ອນຄົງຄ້າງ ເປັນຕົ້ນແມ່ນກະກຽມດ້ານເນື້ອໃນ, ບໍລິຫານ-ພິທີການ, ວຽກງານປ້ອງກັນ, ວຽກງານສື່ມວນຊົນ ແລະ ອື່ນໆ ໃນໄລຍະດຳເນີນກອງປະຊຸມລະຫວ່າງວັນທີ 13-17 ກຸມພາ 2023 ຜ່ານມາ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນປະກອບເຫັນ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ແລະ ມີຈຸດສຸມ ເພື່ອນຳເອົາເນື້ອໃນຈິດໃຈຂອງກອງປະຊຸມຄັ້ງນີ້ ຖອດຖອນເປັນບົດຮຽນ ເພື່ອນຳໄປປັບປຸງການຈັດຕັ້ງປະຕິບັດກອງປະຊຸມໃນຄັ້ງຕໍ່ໄປໃຫ້ດີຂຶ້ນເລື້ອຍໆ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນໂອ້ລົມ ທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ທີ່ໄດ້ພ້ອມກັນເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຕາມການມອບໝາຍໃນການກະກຽມ ແລະ ດຳເນີນກອງປະຊຸມດັ່ງກ່າວ ມີຜົນສຳເລັດອັນຈົບງາມ; ພ້ອມນັ້ນ, ທ່ານຍັງໄດ້ທັງຮຽກຮ້ອງໃຫ້ພະນັກງານ-ລັດຖະກອນທັງໝົດ ຈົ່ງສືບຕໍ່ຈັດຕັ້ງເສີມຂະຫຍາຍດ້ານດີຜົນງານ, ປັບປຸງແກ້ໄຂບັນຫາ ທີ່ຍັງຄົງຄ້າງ ເປັນຕົ້ນ: ເພີ່ມທະວີຄວາມເປັນເຈົ້າການໃນການກະກຽມເນື້ອໃນ, ບໍລິຫານ-ພິທີການ ຮັບໃຊ້ກອງປະຊຸມທັນກຳນົດເວລາ, ກົນໄກການປະສານງານຮ່ວມກັບອົງການປົກຄອງແຂວງ, ຂະແໜງການທີ່ກ່ຽວຂ້ອງໃຫ້ມີຄວາມຄ່ອງຕົວ ແລະ ອື່ນໆ ເພື່ອເປັນບົດຮຽນໃຫ້ແກ່ການດຳເນີນກອງປະຊຸມຄັ້ງຕໍ່ໆໄປກ້າວໄປສູ່ທັນສະໄໝ ແລະ ມີຄຸນນະພາບດີຂຶ້ນກວ່າເກົ່າ.

(ເອິນ ແກ້ວບຸນມີ)

# ສສຊ ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຢູ່ເມືອງພິນ



(ສພຊ) ໃນວັນທີ 1-2 ມີນາຜ່ານມາ, ທ່ານ ກົງແກ້ວ ມີວໍລະຈັກ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13, ປະທານສະພາປະຊາຊົນແຂວງສະຫວັນນະເຂດ, ທ່ານ ພົທ. ຄູນສະໄໝ ລິນສັນຍາ ສສຊ ປະຈຳເຂດເລືອກຕັ້ງທີ 13, ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພ້ອມດ້ວຍທ່ານ ແກ້ວວິໄສ ອິນທິລາດ, ທ່ານ ນາງ ຄຳຫຼ້າ ສະຫວັນໄຊ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງພິນ ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ຕິດພັນກັບການພົບປະຢ້ຽມຢາມຜູ້ມີສິດເລືອກຕັ້ງຢູ່ 3 ຈຸດຂອງຢູ່ເມືອງຄື: ຈຸດທີ 1 ກຸ່ມບ້ານອະນຸສັນຍາ, ຈຸດທີ 2 ຢູ່ກຸ່ມບ້ານຈຸດສຸມນາໂພຄຳ, ຈຸດທີ 3 ຢູ່ກຸ່ມບ້ານໂພນໄຊ ໂດຍການຕ້ອນຮັບຂອງທ່ານ ສາລີ ວິນລາວັນ ເຈົ້າເມືອງ ເມືອງພິນ ພ້ອມດ້ວຍການນຳຂອງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກຳລັງ ປກຊ-ປກສ, ພະນັກງານ ແລະ ພໍ່ແມ່ປະຊາຊົນພາຍໃນເມືອງເຂົ້າຮ່ວມ.

ໃນການເຄື່ອນໄຫວຄັ້ງນີ້, ສສຊ ແລະ ສສຂ ໄດ້ຜັດປ່ຽນກັນນຳເອົາເນື້ອໃນຈິດໃຈຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາປະຊາຊົນແຂວງ ຊຸດທີ II ເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ທັງໄດ້ຮັບຟັງການລາຍງານການນຳພາຊີ້ນຳວຽກງານຂອງຄະນະບ້ານ ແລະ ຮັບຟັງບົດລາຍງານແຜນພັດພັດທະນາເສດຖະກິດ-ສັງຄົມຂອງເມືອງໂດຍສັງເຂບ. ພ້ອມນັ້ນ, ໃນໂອກາດທີ່ເຄື່ອນໄຫວ ສສຊ ແລະ ສສຂ ຍັງໄດ້ຮັບຟັງຄຳຄິດເຫັນ, ຄຳສະເໜີຂອງພໍ່ແມ່ປະຊາຊົນທີ່ສະເໜີໃຫ້ຊ່ວຍກ່ຽວກັບການພັດທະນາພື້ນຖານໂຄງລ່າງ, ບັນຫາຢາເສບຕິດ ແລະ ແກ້ໄຂບັນດາປາກົດການຫຍໍ້ທໍ້ຕ່າງໆ ໃນສັງຄົມ.

ໃນໂອກາດນີ້, ຄະນະ ສສຊ ຍັງໄດ້ນຳເອົາເຂົ້າສານໜຽວ ຈຳນວນ 280 ກິໂລ ແລະ ຜ້າຫົ່ມກັນໜາວ 40 ຜືນ ມອບໃຫ້ກັບທາງຄະນະບ້ານໂພນໄຊ ເພື່ອນຳໄປແຈກຢາຍຕໍ່ໃຫ້ກັບຄອບຄົວທີ່ທຸກຍາກພາຍໃນບ້ານ.

# ຫວນຄືນມູນເຊື້ອວັນແມ່ຍິງສາກົນ ຄົບຮອບ 113 ປີ ແລະ ມອບຫຼຽນ-ໃບຍ້ອງຍໍໃຫ້ບຸກຄົນທີ່ມີຜົນງານດີເດັ່ນ

(ສພຊ) ໃນວັນທີ 6 ມີນາ 2023 ຢູ່ທີ່ສະໂມສອນສະພາປະຊາຊົນແຂວງ (ສພຂ) ເຊກອງ, ໜ່ວຍສະຫະພັນແມ່ຍິງ ສພຂ ເຊກອງ ໄດ້ຈັດພິທີຫວນຄືນປະຫວັດການກຳເນີດວັນແມ່ຍິງສາກົນ ຄົບຮອບ 113 ປີ (8 ມີນາ 1910-8 ມີນາ 2023) ພາຍໃຕ້ຫົວຂໍ້: “ການນຳໃຊ້ດີຈີຕອນ ສຳລັບທຸກຄົນ, ການນຳໃຊ້ນະວັດຕະກຳໃໝ່ ແລະ ເຕັກໂນໂລຊີ ເພື່ອຄວາມສະເໝີພາບຍິງ-ຊາຍ” ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະໜ່ວຍ, ຫົວໜ້າ-ຮອງຫົວໜ້າຈຸ, ສະມາຊິກພາຍໃນໜ່ວຍສະຫະພັນແມ່ຍິງ ສພຂ ເຊກອງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໃນພິທີ, ທ່ານ ນາງ ບຸນຮູ້ ດວງບຸບຜາ ປະທານໜ່ວຍສະຫະພັນແມ່ຍິງ ສພຂ ເຊກອງ ໄດ້ຍົກໃຫ້ເຫັນຄວາມເປັນມາ ແລະ ການກຳເນີດເກີດຂຶ້ນຂອງວັນແມ່ຍິງສາກົນ ໃນທ່າມກາງເສດຖະກິດຂອງພວກສັກດີນາ ແລະ ນາຍທຶນພວມຂະຫຍາຍຕົວ ມັນໄດ້ສ້າງຄວາມຮັ່ງມີໃຫ້ແກ່ນາຍທຶນ ແຕ່ກົງກັນຂ້າມຍິ່ງເພີ່ມຄວາມທຸກຍາກໃຫ້ແກ່ຊາວຜູ້ອອກແຮງງານ ໂດຍສະເພາະກຳມະກອນແມ່ຍິງຖືກກົດຂີ່ຂູດຮີດຢ່າງໜັກໜ່ວງ, ເຮັດວຽກຫຼາຍຊົ່ວໂມງແຕ່ໄດ້ຄ່າແຮງງານຕ່ຳ, ບໍ່ມີການຮັບປະກັນສຸຂະພາບຂອງແມ່ຍິງ ແລະ ເດັກນ້ອຍ, ຖືກດູໝິ່ນປະໝາດຖືແມ່ຍິງເປັນສິນຄ້າເຄື່ອງຫຼິ້ນ, ຂົ່ມຂືນທຳສຳເລົາ ແລະ ໄລ່ອອກຈາກວຽກ ໃນເວລາຖືພາ, ເກີດລູກ ຫຼື ເວລາເຈັບເປັນບໍ່ໄດ້ຮັບຄວາມເປັນທຳ, ຕໍ່ໜ້າສະພາບການດັ່ງກ່າວກຳມະກອນແມ່ຍິງຮູ້ສຶກຄຽດແຄ້ນ ຈຶ່ງໄດ້ສາມັກຄີກັນລຸກຂຶ້ນຕໍ່ສູ້ທວງໃຫ້ນາຍທຶນ, ເຈົ້າຂອງໂຮງຈັກ-ໂຮງງານແກ້ໄຂຊີວິດການເປັນຢູ່ໃຫ້ເຂົາເຈົ້າ, ວັນທີ 8 ມີນາ 1899 ກຳມະກອນແມ່ຍິງຢູ່ໂຮງງານຕັດຫຍິບ-ຕ່ຳແຜ່ນ ທີ່ເມືອງນິວຢອກ ສະຫະລັດອາເມລິກາ ໄດ້ໂຮມຊຸມນຸມປະທ້ວງ ແລະ ຄັດຄ້ານຕໍ່ການໃຫ້ຄ່າແຮງງານຕ່ຳ ແຕ່ຖືກຕຳຫຼວດເຂົ້າສະຫຼາຍ ແລະ ຈັບກຸມ, ຮອດວັນທີ 8 ມີນາ 1908 ແມ່ຍິງຈຳນວນ 15.000 ຄົນ ໄດ້ເດີນຂະບວນປະທ້ວງຢູ່ ເມືອງນິວຢອກອີກຄັ້ງ ເພື່ອໃຫ້ພວກນາຍທຶນຫຼຸດຜ່ອນຊົ່ວໂມງເຮັດວຽກ, ຢຸດເຊົາການກົດຂີ່ຂູດຮີດແຮງງານເດັກ ແລະ ທວງໃຫ້ແມ່ຍິງມີສິດອອກສຽງ ໃນການເລືອກຕັ້ງ-ຮັບສະໝັກເລືອກຕັ້ງ, ແລະ ມີສິດເທົ່າທຽມກັບຜູ້ຊາຍ. ຈົນມາຮອດປີ 1910 ການຕໍ່ສູ້ຂອງແມ່ຍິງໄດ້ແຜ່ຂະຫຍາຍອອກໄປສູ່ປະເທດນາຍທຶນຢູ່ທະວີບເອີຣົບ ແລະ ໄດ້ມີກອງປະຊຸມສາກົນກ່ຽວກັບບັນຫາແມ່ຍິງຄັ້ງທຳອິດຢູ່ໂກເປນຮາກປະເທດແດນມາກ, ມີ 17 ປະເທດເຂົ້າຮ່ວມ ແລະ ໄດ້ຕົກລົງຮັບຮອງເອົາວັນທີ 8 ມີນາ ເປັນວັນແມ່ຍິງສາກົນ.



ວັນທີ 8 ມີນາ ແມ່ນເຫດການທາງການເມືອງທີ່ສຳຄັນ, ເປັນຂີດໝາຍແຫ່ງໄຊຊະນະອັນພື້ນຖານຂອງຂະບວນການແມ່ຍິງສາກົນ ໃນການຕໍ່ສູ້ທວງເອົາສິດຜົນປະໂຫຍດອັນເປັນທຳໃຫ້ແກ່ແມ່ຍິງຊາວຜູ້ອອກແຮງງານໃນທົ່ວໂລກ, ເປັນວັນລະນຶກເຖິງການຕໍ່ສູ້ຂອງແມ່ຍິງເພື່ອປົດປ່ອຍຕົນເອງ ແລະ ທວງໃຫ້ມີສິດສະເຫມີພາບ ປະຊາທິປະໄຕ ຄືກັນກັບຜູ້ຊາຍ ທວງໃຫ້ພວກນາຍທຶນແກ້ໄຂຊີວິດການເປັນຢູ່ພາຍໃຕ້ຄຳຂວັນ: “ຜູ້ໜຶ່ງ ເຮັດວຽກມື້ລະ 8 ຊົ່ວໂມງ, ແມ່ຍິງ ແລະ ຜູ້ຊາຍ ເຮັດວຽກຄືກັນ ຕ້ອງໄດ້ຮັບເງິນເດືອນເທົ່າກັນ, ຕ້ອງມີລະບອບປ້ອງກັນສຸຂະພາບຂອງແມ່ຍິງ ແລະ ເດັກນ້ອຍ, ຕ້ານສົງຄາມຮຸກຮານ, ປົກປັກຮັກສາສັນຕິພາບຂອງໂລກ”.

ທັງນີ້, ກໍເພື່ອເຮັດໃຫ້ເອື້ອຍນ້ອງສະຫະພັນແມ່ຍິງພາຍໃນໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງ ເຊກອງ ໄດ້ຮັບຮູ້ ແລະ ເຂົ້າໃຈຄວາມໝາຍ, ຄວາມສຳຄັນຂອງວັນດັ່ງກ່າວ ແລະ ນຳເອົາເນື້ອໃນຈິດໃຈຂອງການປາຖະກະຖາຄັ້ງນີ້ ໄປໝູນໃຊ້ເຂົ້າໃນໜ້າທີ່ວຽກງານຕົວຈິງຂອງຕົນໃຫ້ມີບາດກ້າວຫັນປ່ຽນຢ່າງຕັ້ງໜ້າ.

ໃນວັນດຽວກັນນີ້, ໄດ້ມີພິທີມອບຫຼຽນ ແລະ ໃບຍ້ອງຍໍຜົນງານ 5 ປີ ວຽກງານການແຂ່ງຂັນຮັກຊາດ ແລະ ພັດທະນາ (2016-2020) ຢູ່ທີ່ສະໂມສອນ ສພຂ ພາຍໃຕ້ການເປັນປະທານຂອງທ່ານ ດົງເຜັດ ພະຍົນ, ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ພະນັກງານຫຼັກແຫຼ່ງ ສພຂ, ພະນັກງານອາວຸໂສບຳນານ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ນາງ ບົວທອງ ຄຸ້ມມະວົງ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານດຳລັດຂອງປະທານປະເທດ ສະບັບເລກທີ 167/ປປທ, ລົງວັນທີ 14/9/2022; ຜ່ານດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 14/9/2022 ແລະ ຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 03/ຊກ, ລົງວັນທີ 10/1/2022.

ຈາກນັ້ນ, ກໍໄດ້ມີການມອບຫຼຽນໄຊແຮງງານຊັ້ນ II, ຫຼຽນໄຊແຮງງານຊັ້ນ III, ຫຼຽນກາແຮງງານ ແລະ ມອບໃບຍ້ອງຍໍໃຫ້ກັບບຸກຄົນທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຫື່ອແຮງເຂົ້າໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ຜັນຂະຫຍາຍວຽກງານສາມສ້າງ ໃນທົ່ວປະເທດ ແລະ ທົ່ວແຂວງ ໄລຍະ 5 ປີ 2016-2020. ໃນນັ້ນ, ບຸກຄົນທີ່ໄດ້ຮັບຫຼຽນໄຊແຮງງານຊັ້ນ II ມີຈຳນວນ 6 ທ່ານ; ຫຼຽນໄຊແຮງງານຊັ້ນ III ມີ 4 ທ່ານ ຍິງ 1 ທ່ານ, ຫຼຽນກາແຮງງານມີ 5 ທ່ານ ຍິງ 2 ທ່ານ, ໃບຍ້ອງຍໍລັດຖະບານມີ 14 ທ່ານ ຍິງ 3 ທ່ານ, ໃບຍ້ອງຍໍເຈົ້າແຂວງ 19 ທ່ານ ຍິງ 9 ທ່ານ ເຊິ່ງຜົນງານດັ່ງກ່າວເປັນການປະກອບສ່ວນອັນສຳຄັນໃຫ້ແກ່ການພັດທະນາປະເທດຊາດ ກໍຄືແຂວງເຊກອງ.

ໂອກາດນີ້, ທ່ານ ດົງເຜັດ ພະຍົນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ສາມາດຈັດຕັ້ງປະຕິບັດໄດ້ໃນໄລຍະຜ່ານມາ ແລະ ເນັ້ນໃຫ້ຄະນະພັກ-ຄະນະນຳແຕ່ລະຂັ້ນ ສພຂ ເຊກອງ ສືບຕໍ່ນຳພາ-ຊີ້ນຳພະນັກງານ, ສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງຂອງຕົນ ຈັດຕັ້ງປະຕິບັດມະຕິຄຳສັ່ງ, ແຜນງານ, ໂຄງການຕ່າງໆ ທີ່ຂະແໜງການຕົນວາງໄວ້ໃຫ້ມີຜົນສຳເລັດ ແລະ ໃຫ້ຖືກຕາມລະບຽບກົດໝາຍ ແນໃສ່ພັດທະນາເສດຖະກິດ-ສັງຄົມ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດລົງເປັນກ້າວໆ.

ຄຽງຄູ່ກັນນັ້ນ, ຕ້ອງໄດ້ຍູ້ແຮງຂະບວນການແຂ່ງຂັນ-ຍ້ອງຍໍ ໂດຍຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ຜັນຂະຫຍາຍວຽກງານ 3 ສ້າງ ເຂົ້າສູ່ທຸກຂົງເຂດວຽກງານຢ່າງຕັ້ງໜ້າ; ປຸກລະດົມສະມາຊິກພັກ, ພະນັກງານຫຼັກແຫຼ່ງ ເຂົ້າຮ່ວມຢ່າງແຂງແຮງ ແລະ ກວ້າງຂວາງ ເພື່ອພ້ອມກັນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ເມືອງ ແລະ ບ້ານໃຫ້ເປັນຂະບວນຟົດຟື້ນ, ຕໍ່ເນື່ອງ ແລະ ມີຜົນສຳເລັດ.

(ນາລີວັນ)

## ເຄື່ອນໄຫວເກັບກຳຂໍ້ມູນຄອບຄົວທຸກຍາກ ບ້ານກອງລືໃຫຍ່ ເມືອງວາປີ

(ສພຊ) ພັກ-ລັດ ແຫ່ງ ສປປລາວ ເຫັນໄດ້ຄວາມສຳຄັນໃນການແກ້ໄຂຄອບຄົວຜູ້ທຸກຍາກໃຫ້ໝົດໄປ ແລະ ມີຊີວິດການເປັນຢູ່ທີ່ດີຂຶ້ນ, ມີເຮືອນພັກອາໄສແໜ້ນໜາ, ມີອາຊີບ, ມີບ່ອນທຳການຜະລິດປູກຝັງລ້ຽງສັດ ແລະ ລູກຫຼານໄດ້ຮັບການສຶກສາ ທັງນີ້, ເພື່ອເປັນປະກອບສ່ວນເຂົ້າໃນການສ້າງສາ ແລະ ພັດທະນາປະເທດຊາດ ສາມາດຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາຢ່າງເປັນຮູບປະທຳ; ໃນວັນທີ 27 ກຸມພາຜ່ານມາ, ທ່ານ ສີເຮັງ ຫອມສົມບັດປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14, ປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ ສົມທົບກັບທ່ານ ບຸນຍູ້ ຈັນທະລັງສີ ກຳມະການພັກແຂວງ, ເລຂາພັກເຈົ້າເມືອງວາປີ ແລະ ທ່ານ ນາງ ອິນແປງ ຊາມຸນຕີ ປະທານສະພາການຄ້າ ແລະ ອຸດສາຫະກຳແຂວງສາລະວັນ, ປະທານໂຄງການຈິດອາສາພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ (ຜູ້ໃຫ້ທຶນຊ່ວຍເຫຼືອປຸກສ້າງເຮືອນຢູ່ອາໄສ) ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຕິດຕາມ ແລະ ເກັບກຳຂໍ້ມູນຄອບຄົວທຸກຍາກ ບ້ານກອງລືໃຫຍ່ ເມືອງວາປີ ແຂວງສາລະວັນ.



ຕາມການລາຍງານຂອງເລຂາຄະນະພັກນາຍບ້ານກອງລືໃຫຍ່ ໃຫ້ຮູ້ວ່າ: ບ້ານກອງລືໃຫຍ່ ແມ່ນບ້ານໜຶ່ງຂຶ້ນກັບກຸ່ມບ້ານພັດທະນາທີ 6 ຂອງເມືອງວາປີ ແຂວງສາລະວັນ ເປັນເຂດພູດອຍຫ່າງໄກສອກຫຼີກ, ມີ 78 ຫຼັງຄາເຮືອນ, ມີ 96 ຄອບຄົວ ແລະ ມີພົນລະເມືອງທັງໝົດ 453 ຄົນ ຍິງ 239 ຄົນ ມີ 2 ຊົນເຜົ່າຄື: ເຜົ່າລາວລຸ່ມ ແລະ ເຜົ່າກະຕາງ, ຍັງມີ 5 ຄອບຄົວຜູ້ທຸກຍາກ ຄື: 1. ຄອບຄົວ ທ້າວ ຄຳຈັນ ອາຍຸ 32 ປີ, ມີສະມາຊິກຄອບຄົວ 7 ຄົນ ຍິງ 3 ຄົນ ເຮືອນຢູ່ອາໄສບໍ່ສົມບູນ ເກົ່າຊຸດໂຊມ ຂາດເຂົ້າ ບໍ່ກຸ້ມກິນ; 2. ຄອບຄົວ ທ້າວ ເປີນ ອາຍຸ 28 ປີ ມີສະມາຊິກຄອບຄົວ 3 ຄົນ ຍິງ 2 ຄົນ ເຮືອນຢູ່ອາໄສບໍ່ສົມບູນ ເກົ່າຊຸດໂຊມ ແລະ ບໍ່ມີດິນປຸກສ້າງເຮືອນ, ຂາດເຂົ້າ ບໍ່ກຸ້ມກິນ, ບໍ່ມີດິນທຳການຜະລິດ; 3. ຄອບຄົວ ທ້າວ ສີລານ ອາຍຸ 37 ປີ ມີສະມາຊິກຄອບຄົວ 7 ຄົນ ຍິງ 4 ຄົນ ເຮືອນຢູ່ອາໄສບໍ່ສົມບູນ ເກົ່າຊຸດໂຊມ; 4. ຄອບຄົວທ້າວ ຄັງ ອາຍຸ 47 ປີ, ມີສະມາຊິກຄອບຄົວ 8 ຄົນ ຍິງ 5 ຄົນ ເຮືອນຢູ່ອາໄສບໍ່ສົມບູນ ເກົ່າຊຸດໂຊມ; 5. ທ້າວ ທອງລື ອາຍຸ 50 ປີ ມີສະມາຊິກຄອບຄົວ 2 ຄົນ ຍິງ 1 ຄົນ ເຮືອນຢູ່ອາໄສບໍ່ສົມບູນ ເກົ່າຊຸດໂຊມ;

ໂຄງການຈິດອາສາພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແມ່ນຈະໄດ້ລົງສຳຫຼວດສະພາບເຮືອນຢູ່ອາໄສ ແລະ ເກັບກຳຂໍ້ມູນຕົວຈິງຂອງ 5 ຄອບຄົວທຸກຍາກ ເພື່ອຄິດໄລ່, ອອກແບບເຮືອນ ແລະ ເລີ່ມລົງມືຈັດຕັ້ງປະຕິບັດປຸກສ້າງ ໃນກາງເດືອນເມສາ 2023 ໂດຍການຊຸກຍູ້ຄອບຄົວຜູ້ທຸກຍາກ ແລະ ແຮງງານພາຍໃນບ້ານ ຫາອຸປະກອນໄມ້ຈາກພາຍໃນບ້ານ ໂຄງການແມ່ນຊ່ວຍເຫຼືອສັງກະສີ, ຕະປູ ແລະ ນາຍຊ່າງນັກອອກແບບ ເພື່ອປຸກສ້າງເຮືອນຢູ່ອາໄສຂອງ 5 ຄອບຄົວທຸກຍາກດັ່ງກ່າວ ໃຫ້ສຳເລັດທັນໃນທ້າຍເດືອນພຶດສະພາ 2023 ແລະ ຈະສືບຕໍ່ໂຄງການແຜນເຄື່ອນໄຫວເກັບກຳຂໍ້ມູນຕື່ມອີກ 3 ເມືອງພູດອຍຄື ເມືອງຕຸ້ມລານ, ເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ.

(ດີລຳພົນ ພົມມະຈັນ)

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງໄຊສົມບູນ



(ສພຊ) ກອງປະຊຸມເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II ໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 16 ມີນາ 2023 ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານສະພາປະຊາຊົນແຂວງ, ມີທ່ານ ນາງ ເພັດສະໄໝ ໂພໄຊຍະວົງ ປະທານກວດກາພັກ-ອົງການກວດກາລັດແຂວງ, ທ່ານ ສັງຄົມ ສູນດາລາ ປະທານຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງອະນຸວົງ, ບັນດາພະແນກການ, ອົງການ, ກົມກອງອ້ອມຂ້າງແຂວງ ພ້ອມດ້ວຍພະນັກງານພາຍໃນເມືອງອະນຸວົງເຂົ້າຮ່ວມ.

ໂອກາດນີ້, ຜູ້ເຂົ້າຮ່ວມໄດ້ຮັບຟັງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ຈາກທ່ານ ແດງ ປະທຸມທອງ ເຊິ່ງກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນຫາທີ່ສຳຄັນພື້ນຖານຂອງປະເທດຊາດ ໂດຍໄດ້ອອກເປັນມະຕິກອງປະຊຸມຈຳນວນ 21 ສະບັບ ໃນນັ້ນ, ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍ ໄດ້ຮ່າງກົດໝາຍສ້າງໃໝ່ 3 ສະບັບຄື: ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ, ກົດໝາຍວ່າດ້ວຍການທາງນ້ຳ, ກົດໝາຍວ່າດ້ວຍຫໍພິພິທະພັນ ແລະ ໄດ້ປັບປຸງກົດໝາຍວ່າດ້ວຍທະນາຍຄວາມ, ກົດໝາຍວ່າດ້ວຍທະບຽນສານ, ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່, ກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ, ກົດໝາຍວ່າດ້ວຍອົງການໄອຍະການທະຫານ, ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ, ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແລະ ກົດໝາຍວ່າດ້ວຍການກວດກາລັດ; ພ້ອມດຽວກັນນັ້ນ, ທ່ານ ສັງຄົມ ສູນດາລາ ໄດ້ຂຶ້ນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງໄຊສົມບູນຊຸດທີ II ເຊິ່ງກອງປະຊຸມໄດ້ພິຈາລະນາຮັບຮອງ ແລະ ອອກເປັນມະຕິກອງປະຊຸມ ຈຳນວນ 10 ສະບັບ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້, ເຂົ້າໃຈ ແລະ ນຳເອົາມະຕິກອງປະຊຸມໄປຜັນຂະຫຍາຍເຂົ້າໃນວຽກງານຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ໄດ້ຮັບຜົນລຳເລັດເປັນຢ່າງດີ. ຈາກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ສະເໜີບັນຫາຕ່າງໆໃຫ້ຄະນະສະມາຊິກສະພາປະຊາຊົນແຂວງໄດ້ຮັບຊາບເພື່ອນຳໄປພິຈາລະນາ, ແກ້ໄຂໃຫ້ສອດຄ່ອງ, ຖືກຕ້ອງ ຕາມບັນດານິຕິກຳທີ່ໄດ້ຮັບຮອງເຂົ້າໃນກອງປະຊຸມດັ່ງກ່າວ.

(ແສງຕາວັນ ລັດຕະນະວົງ)

# ຕິດຕາມກວດກາການຢັ້ງຢືນ ຜົນກະທົບການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ



(ສພຊ) ໃນວັນທີ 27 ກຸມພາ 2023 ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກທີ 17 ແຂວງອັດຕະປື ໄດ້ເຄື່ອນໄຫວຕິດຕາມກວດກາການຢັ້ງຢືນຜົນກະທົບການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນທີ່ດິນປະເພດອື່ນ ລັກສະນະຊົ່ວຄາວ ໃນເຂດປ່າປ້ອງກັນແຫ່ງຊາດ ນ້ຳກົງ-ເຊຊຸ ຢູ່ເມືອງພູວົງ ເພື່ອນຳໃຊ້ເຂົ້າໃນການພັດທະນາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳຂອງບໍລິສັດ ລາວອ້ານເລີຍ ບໍ່ແຮ່ ຈຳກັດ ນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື, ປະທານສະພາປະຊາຊົນແຂວງ; ມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 17, ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສພຊ, ຜູ້ຕາງໜ້າບໍລິສັດ ລາວອ້ານເລີຍ ບໍ່ແຮ່ ຈຳກັດ, ຂະແໜງການ ແລະ ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ໃນການຕິດຕາມກວດກາຂອງສະມາຊິກສະພາແຫ່ງຊາດ ທີ່ໄດ້ລະບຸໄວ້ໃນກົດໝາຍ, ເພື່ອເກັບກຳປົກສາຫາລືແລກປ່ຽນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຢັ້ງຢືນເນື້ອທີ່ປ່າ, ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ແລະ ບັນຫາອື່ນໆ ທີ່ອາດຈະເກີດຂຶ້ນຈາກການພັດທະນາຂອງໂຄງການ ແລະ ເພື່ອໃຫ້ມີຄວາມເປັນເອກະພາບລະຫວ່າງສູນກາງ ແລະ ຂັ້ນທ້ອງຖິ່ນ ທາງດ້ານຂໍ້ມູນ ແລະ ເນື້ອໃນ, ເພື່ອເປັນຂໍ້ມູນໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໃນການຄົ້ນຄວ້າພິຈາລະນາ ຕົກລົງບັນຫາ ກ່ຽວກັບການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນທີ່ດິນປະເພດອື່ນ ລັກສະນະຊົ່ວຄາວ ໃນເຂດປ່າປ້ອງກັນແຫ່ງຊາດ ນ້ຳກົງ-ເຊຊຸ ແລະ ເພື່ອໃຫ້ມີຄວາມຖືກຕ້ອງຕາມລະບຽບຫຼັກການ ແລະ ສອດຄ່ອງຕາມກົດໝາຍ.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານຈາກບໍລິສັດ ລາວອ້ານເລີຍ ບໍ່ແຮ່ ຈຳກັດ ແລະ ຂະແໜງການທີ່ກ່ຽວຂ້ອງ ວ່າ: ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳຂອງບໍລິສັດລາວອ້ານເລີຍ ບໍ່ແຮ່ ຈຳກັດ ຕັ້ງຢູ່ບ້ານນ້ຳຊວນ, ຫ່າງຈາກເທດສະບານເມືອງພູວົງ ແຂວງອັດຕະປື ປະມານ 65 ກິໂລແມັດ, ມີເນື້ອທີ່ທັງໝົດ 600 ເຮັກຕາ, ພື້ນທີ່ສ່ວນໃຫຍ່ແມ່ນມີຄ້ອຍຊັນເປັນສ່ວນຫຼາຍ, ຂອບເຂດດັ່ງກ່າວແມ່ນຕິດກັບຊາຍແດນ ລະຫວ່າງ ສປປລາວ ແລະ ລາຊະອານາຈັກກຳປູເຈຍ ໃນນັ້ນ, ບໍລິສັດ ລາວອ້ານເລີຍ ບໍ່ແຮ່ ຈຳກັດ ສະເໜີຂໍຫັນປ່ຽນການນຳໃຊ້ທີ່ດິນໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ ມີເນື້ອທີ່ທັງໝົດ 42,7 ເຮັກຕາ, ມີ 14 ຕອນ, ທີ່ຕັ້ງ ແຕ່ລະຕອນແມ່ນອນຢູ່ໃນຂອບເຂດການອະນຸຍາດຈາກລັດຖະບານ, ໃນຂອບເຂດ 6 ກິໂລຕາແມັດ ແລະ ອີກ 1 ຕອນແມ່ນຫ້ອງການ ແລະ ເຮືອນພັກພະນັກງານ ແລະ ຂອບເຂດພື້ນທີ່ດັ່ງກ່າວແມ່ນບໍ່ມີຜົນກະທົບຕໍ່ພື້ນທີ່ທຳການຜະລິດຂອງປະຊາຊົນ, ປ່າຊ້າ, ປ່າສັກສິດຂອງບ້ານນ້ຳຊວນ.

ໂອກາດດັ່ງກ່າວ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຊົມເຊີຍຕໍ່ຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ເມືອງ ແລະ ບໍລິສັດທີ່ໄດ້ສະໜອງຂໍ້ມູນຮອບດ້ານໃຫ້ຄະນະທີມງານທີ່ມາເຄື່ອນໄຫວຕິດຕາມກວດກາໃນຄັ້ງນີ້ ເຊິ່ງເປັນຂໍ້ມູນພື້ນຖານອັນລະອຽດທີ່ຈະນຳໄປສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ໃຫ້ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ ແລະ ສະເໜີໃຫ້ຂະແໜງການກ່ຽວເອົາໃຈໃສ່ຕິດຕາມກວດກາ ເຂດຂຸດຄົ້ນຂອງບໍລິສັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບກົດໝາຍ, ໂຄສະນາເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນຮັບຮູ້ ແລະ ເຂົ້າໃຈ ໃນການພັດທະນາຂອງໂຄງການ, ຕອບສະໜອງນະໂຍບາຍ ໃຫ້ປະຊາຊົນບ້ານໃກ້ຄຽງເປັນຕົ້ນພື້ນຖານໂຄ່ງລາງ, ນ້ຳໃຊ້, ການປູກ, ການລ້ຽງ ແລະ ດ້ານອື່ນໆ ຕາມຄວາມເໝາະສົມ.

(ວິບັດ)

# ພົບປະຜູ້ມີສິດເລືອກຕັ້ງທີ່ແຂວງວຽງຈັນ



(ສພຊ) ໃນລະຫວ່າງວັນທີ 22 ກຸມພາ-14 ມີນາ 2023 ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຕ່າງໆ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເພື່ອໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງວຽງຈັນຊຸດທີ II ຄື: ທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢູ່ 5 ຈຸດ, ຂອງ 3 ບ້ານຂອງເມືອງແກ້ວອຸດົມ ແຂວງວຽງຈັນ ຄື: ຫ້ອງວ່າການເມືອງ, ກອງບັນຊາການ ປກສ ເມືອງ, ບ້ານດອນໄຊອຸດົມ, ບ້ານນາແຊະ, ບ້ານວຽງຄຳ; ທ່ານ ຂັນເພັດ ບຸນຕ່ຳ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢູ່ 5 ຈຸດຂອງເມືອງກາສີ ຄື: ບ້ານຜາຕໍ່, ບ້ານຜາຫຼັກ, ບ້ານນາລັນ, ບ້ານນ້ຳພົດ ແລະ ສະໂມສອນປົກຄອງເມືອງກາສີ; ທ່ານ ປອ. ພູທອນ ວໍລະເພັດ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢູ່ 11 ຈຸດ ຂອງເມືອງຊະນະຄາມ ຄື: ບ້ານໂພນສະຫວ່າງ, ບ້ານດອນໂຊກ, ບ້ານນາດີ, ບ້ານດອນພຸງ, ບ້ານຕາດແດດ, ບ້ານນາພຽງ, ບ້ານດົງຂ່າ, ບ້ານໂນນນາແກບ, ບ້ານຄົກງິ້ວ, ຫ້ອງວ່າການເມືອງຊະນະຄາມ ແລະ ບໍລິສັດລາວລີຕູ້ ເຊິ່ງແຕ່ລະຈຸດມີບັນດາເລຂາພັກເມືອງ, ຫົວໜ້າຮອງຫົວໜ້າຫ້ອງການ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນເມືອງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ບັນດາເນື້ອໃນເອກະສານທີ່ນຳໄປເຜີຍແຜ່ປະກອບມີມະຕິສຳຄັນຕ່າງໆ ທີ່ໄດ້ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ໂດຍຕິດພັນກັບການເຜີຍແຜ່ພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສສຊ ແລະ ສສຂ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ແລະ ພໍ່ແມ່ປະຊາຊົນໄດ້ຮັບຮູ້, ເຊື່ອມຊຶມເນື້ອໃນກອງປະຊຸມ ແລະ ແນວທາງນະໂຍບາຍຂອງພັກ-ລັດ; ຈາກນັ້ນ, ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຄວາມຂັດຂ້ອງໝອງໃຈ, ຄວາມຫຍຸ້ງຍາກລຳບາກໃນການດຳລົງຊີວິດຂອງພໍ່ແມ່ປະຊາຊົນ ເຊິ່ງມີຫຼາຍບັນຫາທີ່ສະເໜີຕໍ່ ສສຊ ແລະ ສສຂ; ຕໍ່ກັບບັນຫາດັ່ງກ່າວ ສສຊ ແລະ ສສຂ ໄດ້ຊີ້ແຈງອະທິບາຍ ແລະໃຫ້ຄວາມກະຈ່າງແຈ້ງກັບທີ່ແລ້ວຈຳນວນໜຶ່ງຕໍ່ຄຳສະເໜີຂອງພໍ່ແມ່ປະຊາຊົນໄດ້ຮັບຊາບ ແລະ ຈະນຳເອົາທຸກຄຳສະເໜີ ໄປສົມທົບກັບຂະແໜງການ, ເມືອງ, ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂຕາມຂັ້ນຕອນ ແລະ ລະບຽບການວາງອອກ. ພ້ອມດຽວກັນນັ້ນ, ສສຊ ແລະ ສສຂ ໄດ້ຖືໂອກາດມອບເຄື່ອງນຸ່ງຫົ່ມຈຳນວນໜຶ່ງໃຫ້ແກ່ຄອບຄົວທີ່ຂາດເຂີນຕື່ມອີກດ້ວຍ.

(ຄຳພັນ ໄຊຍະປະທຸມ)




# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ມາດຕາ 59 ເນື້ອໃນການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

2. ການປະຕິບັດ ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງ;

3. ການເຄື່ອນໄຫວຂອງຜູ້ດໍາເນີນທຸລະກິດ ກ່ຽວກັບອາວຸດ ແລະ ວັດຖຸລະເບີດ;

4. ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ການນໍາໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ;

5. ເນື້ອໃນອື່ນ ເມື່ອເຫັນວ່າມີຄວາມສໍາຄັນ ແລະ ຈໍາເປັນ.

**ມາດຕາ 60 ຮູບການ ການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ການກວດກາວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍາ ນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດ ກາຮູ້ກ່ອນລ່ວງໜ້າ.

ໃນການດໍາເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ງົບປະມານ

**ມາດຕາ 61 ງົບປະມານ**

ງົບປະມານຮັບໃຊ້ໃນການເຄື່ອນໄຫວວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ໄດ້ມາຈາກ ງົບປະ ມານແຫ່ງລັດ, ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 62 ການຄຸ້ມຄອງ ແລະ ນໍາໃຊ້ງົບປະມານ**

ອົງການຄຸ້ມຄອງວຽກງານ ອາວຸດ ແລະ ວັດຖຸລະເບີດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 54 ຂອງກົດໝາຍສະບັບນີ້ ເປັນຜູ້ຄຸ້ມຄອງ ແລະ ນໍາໃຊ້ງົບປະມານດັ່ງກ່າວ ດ້ວຍການຂຶ້ນແຜນງົບປະມານກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ເພື່ອສະເໜີຂັ້ນເທິງພິຈາລະນາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 63 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 64 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ສັງຄົມ, ຊີວິດ, ສຸຂະພາບ, ຊັບສິນຂອງຜູ້ອື່ນ, ແຕະຕ້ອງເຖິງຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບ ຮຽບຮ້ອຍຂອງສັງຄົມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ດໍາເນີນຄະດີຕາມກົດໝາຍ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

**ມາດຕາ 65 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ຈະຖືກປັບໃໝ ເນື່ອງຈາກມີພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ຖິ້ມ ຫຼື ທໍາລາຍ ສິ່ງເສດເຫຼືອຂອງວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ເຄື່ອນຍ້າຍ, ຂົນສົ່ງ, ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຈອດຍານພາຫະນະທີ່ຂົນສົ່ງວັດຖຸລະເບີດ ບໍ່ຖືກຕາມຈຸດທີ່ກໍານົດ;

4. ນໍາໃຊ້ຍານພາຫະນະທີ່ບໍ່ຮັບປະກັນມາດຕະຖານຄວາມປອດໄພ ໃນເວລາ ຂົນສົ່ງ ແລະ ເຄື່ອນຍ້າຍ ວັດຖຸລະເບີດ;

5. ມີໄວ້ໃນຄອບຄອງເຄື່ອງມືຊ່ວຍໝູນໂດຍບໍ່ໄດ້ຮັບອະນຸຍາດ;

6. ເອົາໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບວັດຖຸລະເບີດ ໄປຄໍ້າປະກັນ ຫຼື ປະກອບເປັນຮຸ້ນ, ໃຫ້ຜູ້ອື່ນ ຢືມ ຫຼື ເຊົ່າ, ໂອນ ຫຼື ຂາຍ ໃຫ້ຜູ້ອື່ນ;

7. ດໍາເນີນທຸລະກິດ ກ່ຽວກັບວັດຖຸລະເບີດ ບໍ່ຖືກຕ້ອງຕາມຈຸດປະສົງ ທີ່ໄດ້ຮັບອະນຸຍາດ;

8. ຜະລິດ, ນໍາເຂົ້າ, ສົ່ງອອກ, ຂົນສົ່ງ, ຈໍາໜ່າຍ ແລະ ນໍາໃຊ້ ດອກໄມ້ໄຟ ໂດຍບໍ່ໄດ້ຮັບອະນຸຍາດ.

ສໍາລັບ ອັດຕາການປັບໃໝ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 66 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະ ບັບນີ້.

**ມາດຕາ 67 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ ວັນທີ 5 ຕຸລາ 2022 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**




# ວິທີເຮັດວຽກ

ພາກທີ 3

ພະຍາດເປັນແຕ່ປາກ (ຕໍ່)

ສະໄໝຕໍ່ຕ້ານນີ້, ນັກຮົບທີ່ຢູ່ຕາມແນວຮົບ ຕ້ອງຕີເສິກ, ພີ່ນ້ອງຮ່ວມຊາດທີ່ຢູ່ແນວຫຼັງ ຕ້ອງເພີ່ມພູນຜະລິດຜົນ, ແມ່ນໃຜຈະມີເວລາອ່ານບົດຄວາມທີ່ຍືດຍາວແນວນັ້ນ ຂຽນຍາວແຕ່ເປົ່າຫວ່າງ ບໍ່ມີເນື້ອໃນແມ່ນບໍ່ດີ, ຂຽນສັ້ນແຕ່ເປົ່າຫວ່າງ ບໍ່ມີເນື້ອໃນກໍບໍ່ດີ. ພວກເຮົາຕ້ອງຕ້ານຢັນນິດໄສເປົ່າຫວ່າງ, ກ່ອນອື່ນແມ່ນຕ້ານຢັນນິດໄສທັງເປົ່າຫວ່າງທັງຍືດຍາວ, ຄັນຊັ້ນ, ປຶ້ມທິດສະດີ ຫຼື ວ່າປຶ້ມບົດຮຽນທີ່ພວກເຮົາພວມອ່ານຢູ່ດຽວນີ້ນັ້ນ ມັນບໍ່ຍາວບໍ່? ແມ່ນແລ້ວ ປຶ້ມຫົວນີ້ກໍຍາວ, ແຕ່ວ່າແຕ່ລະຄວາມ, ແຕ່ລະປະໂຫຍກມັນຊໍ້າພັດມີຄວາມໝາຍຂອງມັນ, ມີຈຸດປະສົງຂອງມັນ, ມັນບໍ່ແມ່ນເປົ່າຫວ່າງ.

ຜູ້ເຖົ້າເຄີຍສັ່ງສອນພວກເຮົາວ່າ: “ແປງຄອກໃຫ້ແທກມ້າ ຕັດໂສ້ງເສື້ອໃຫ້ແທກຄົນ”. ບໍ່ວ່າເຮັດວຽກການອັນໃດກໍຕ້ອງມີຂອບເຂດຂອງມັນ, ການຂຽນ ແລະ ການເວົ້າກໍເຊັ່ນດຽວກັນ. ການທີ່ພວກເຮົາຕ້ານນັ້ນ ແມ່ນຕ້ານການເວົ້າຍາວ ຂຽນກວ້າງບໍ່ມີເນື້ອໃນເທົ່ານັ້ນ, ບໍ່ແມ່ນວ່າອັນໃດກໍຕ້ອງສັ້ນໝົດຈຶ່ງດີ.

ຕາມທໍາມະດາ ການຂຽນແມ່ນຕ້ອງສັ້ນນັ້ນແລ້ວ, ແຕ່ວ່າສິ່ງສໍາຄັນກ່ອນອື່ນໝົດ ແມ່ນຕ້ອງໃຫ້ມີເນື້ອໃນ, ພວກເຮົາຕ້ອງແກ້ໄຂພະຍາດຂຽນຍາວ ເວົ້າກວ້າງ ແຕ່ຫວ່າງເປົ່າ.

ຂ) ມີນິດໄສອ້ອມອ້ຽວ:

ໃນໜັງສືພິມ, ໃນໃບປິວ, ໃນປຶ້ມ, ຕາມຝາປະທາຍ ມັກມີຮູບແຕ້ມ ຫຼື ມີຄໍາຂວັນຂຽນໃສ່. ຮູບແຕ້ມ ແລະ ຄໍາຂວັນນັ້ນ ຫຼາຍຄົນເບິ່ງບໍ່ຮູ້ວ່າແມ່ນເພິ່ນເວົ້າຫຍັງ, ເບິ່ງຮູບບໍ່ເຂົ້າໃຈ ເບິ່ງຕົວໜັງສືກໍອ່ານບໍ່ອອກ. ເຈົ້າຂອງຜູ້ແຕ້ມນັ້ນຊໍ້າພັດວ່າມີສິລະປະ, ວ່າງາມ, ແຕ່ວ່າຕາມຄວາມຈິງແທ້ ແມ່ນເຂົາແຕ້ມ ແລະຂຽນ ເພື່ອເຂົາເອງເບິ່ງແຕ່ຜູ້ດຽວເທົ່ານັ້ນ, ເພາະວ່າຜູ້ອື່ນເບິ່ງນໍາບໍ່ເຂົ້າໃຈໄດ້.

ອ່ານຕໍ່ສະບັບໜ້າ...




# ເກືອເປັນໜອນ

# ດົ້ນກົບເມກ

ຄຸນສົມບັດຂອງເກືອມີຣົດເຄັມ ແລະ ເກືອກໍຮັກສາຄວາມເຄັມບໍ່ມີວັນຈືດຈາງ ການທີ່ຄົນບູຮານຝາກຄຳເວົ້າໄວ້ ເພື່ອຢາກເຕືອນຄົນໄດ້ມີສະຕິບໍ່ຫຼົງລືມ ຫຼື ຫຼົງເຫື່ຄົນບໍ່ດີທີ່ມີລັກສະນະໜ້າໄຫວ້ຫຼັງຫຼອກ ຫຼື ປາກຫວານໃຈສົ້ມ, ປາກຊື່ໃຈຄົດ ຖ້າວ່າໃຜກໍຕາມຫາກມີຄົນປະເພດຂ້າງເທິງນັ້ນຢູ່ແວດລ້ອມອ້ອມຕົວ ຍິ່ງຈະເກີດອັນຕະລາຍຕໍ່ໜ້າທີ່ວຽກງານ ເຊິ່ງມີທ່າອ່ຽງສູງທີ່ຈະເສຍຫາຍໂດຍບໍ່ຄາດຄິດ ຍ້ອນວ່າຮ່ວມວຽກ ຫຼື ຢູ່ຮ່ວມກັນມາດົນ ແຕ່ຜູ້ຄິດຄົດ ທໍລະຍົດຫັກຫຼັງໝູ່ ປຽບທາດຂາດຄຸນ, ຄົນບູຮານຍັງຕີຄວາມໝາຍເລິກຕື່ມອີກວ່າ ຍາດພີ່ນ້ອງສາຍເລືອດດຽວກັນ ຫຼື ສາມີ, ຜົວເມຍ ກໍສາມາດຫັກຫຼັງກັນໄດ້ ຈຶ່ງໄດ້ກ່າວເຕືອນເປັນຄຳເວົ້າໃຫ້ໄດ້ຄິດໄຕ່ຕອງຖີ່ຖ້ວນຢ່າງຮອບຄອບ.ດັ່ງນັ້ນ, ຄົນບູຮານລາວ ຈຶ່ງໄດ້ສອນເລື່ອງການຮັກສາຄວາມລັບໄວ້ວ່າ ລະຫັດລັບບໍ່ໃຫ້ເຖິງສອງຄົນ, ການເບິ່ງຄົນໃຫ້ອອກ, ການຊັ່ງຊາປະເມີນຄົນ ຫຼື ບໍລິວານທີ່ຮັບໃຊ້ວຽກ ຕ້ອງຮູ້ຢ່າງຈະແຈ້ງ ເພາະຖ້າຫາກວ່າຫົວໜ້າ ຫຼື ຜູ້ນຳ ໄດ້ບໍລິວານປະເພດເກືອເປັນໜອນ ຫຼື ຈະເອີ້ນວ່າບໍລິວານເປັນພິດ ຍ່ອມນຳມາເຊິ່ງຄວາມຈິບຫາຍວາຍວອດ, ຂະນະດຽວກັນ ກໍຢ່າລືມວ່າຕ້ອງຕີຄວາມໃຫ້ແຈ້ງວ່າ ຄົນປາກຫວານໃຈສົ້ມ ເປັນແນວໃດ ຫຼື ບາງຄົນປາກກົງເວົ້າບໍ່ຖືກໃຈ ແຕ່ຖືກຕ້ອງ...

ດັ່ງນັ້ນ, ເຮົາຕ້ອງໄດ້ເລືອກຄິດພິຈາລະນາໃຫ້ຖີ່ຖ້ວນ ເພື່ອປ້ອງກັນເກືອເປັນໜອນ, ປ້ອງກັນຄົນບໍ່ດີແຊກຊຶມໃນຄາບມິດ ແຕ່ຈິດໃຈເປັນສັດຕູ ຖ້າຂາດສະຕິນ້ຳຕາຊິໄດ້ເຊັດຫົວເຂົ່າ!



ທັງສ່ວນຕົວ ແລະ ສ່ວນລວມ ເພາະຍ້ອນມີປະເພດຄົນຄິດຄົດ ທໍລະຍົດໝູ່ພວກພີ່ນ້ອງວົງວານ.

ເກືອເປັນໜອນ ຫຼື ໄສ້ຢູ່ທ້ອງກັບເກີດເປັນໜອນ ເຊິ່ງມຸ່ງໝາຍເຖິງຄົນພວກດຽວກັນ ຫຼື ຍາດມິດ, ພີ່ນ້ອງ; ຄົນເຮັດວຽກຮ່ວມກັນຄິດຄົດໂກງ, ຫັກຫຼັງກັນ ພາໃຫ້ເກີດຄວາມໝາຍຄວາມວ່າໃຫ້ຮູ້ພຽງແຕ່ຄົນດຽວ.

ສຸພາສິດເຕືອນໃຈທີ່ໄດ້ສອນໄວ້ເປັນປົດສະໜາເລື່ອງເກືອເປັນໜອນ ຫຼື ໄສ້ຢູ່ທ້ອງກັບເກີດເປັນໜອນນີ້ ເຮົາຍັງສາມາດຖືເອົາເປັນຄະຕິບົດຮຽນເຕືອນໃຈໃນໜ່ວຍງານການຈັດຕັ້ງ-ການຄັດສັນເລືອກ

ສະເໜີແລກປ່ຽນ.

# 4 ບົດຮຽນ 6 ເປົ້າໝາຍຂອງພັກ

# ໂດຍ: ດອກຫຍ້າ

(ຕໍ່ຈາກສະບັບກ່ອນ)

ສືບຕໍ່ນຳພາພາລະກິດປ່ຽນແປງໃໝ່ ໄປສູ່ຈຸດໝາຍຢ່າງມີໄຊໃນຊຸມປີຕໍ່ໜ້າ, ຍຶດໝັ້ນ ແລະ ເອກະພາບກັນ, ສືບຕໍ່ບູລະນະປະຊາທິປະໄຕປະຊາຊົນໃຫ້ສົມບູນຍິ່ງຂຶ້ນ, ສ້າງການຫັນປ່ຽນແຂງແຮງ ເລິກເຊິ່ງ ແລະ ຮອບດ້ານ ເພື່ອກ້າວເດີນສູ່ສັງຄົມນິຍົມ ໂດຍຖືເອົາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນໜ້າທີ່ພື້ນຖານ, ການພັດທະນາ ແລະ ການແກ້ໄຂບັນຫາເສດຖະກິດເປັນໜ້າທີ່ໃຈກາງ, ການພັດທະນາຊັບພະຍາກອນມະນຸດ ແລະ ສະໜອງສີມືແຮງງານແກ່ບັນດາໂຄງການພັດທະນາເປັນໜ້າທີ່ແຖວໜ້າ, ການປັບປຸງຄຸນນະພາບວຽກງານພັກ-ພະນັກງານ ເປັນອັນຕັດສິນແນໃສ່ເຮັດໃຫ້ບັນດາປະຖົມປັດໄຈ ກ້າວຂຶ້ນເດີນສູ່ສັງຄົມນິຍົມ ທີ່ມີໃນປັດຈຸບັນ ໄດ້ຮັບການປັບປຸງຍົກລະດັບຢ່າງຕໍ່ເນື່ອງ ແລະ ສາມາດກາຍເປັນອົງປະກອບສຳຄັນພື້ນຖານ ໃຫ້ແກ່ການກໍ່ຕົວ ແລະ ຂະຫຍາຍຕົວ ຂອງຮູບຖານເສດຖະກິດ-ສັງຄົມ ສັງຄົມນິຍົມໄລຍະຕົ້ນ, ເຮັດໃຫ້ບັນດາຄຸນລັກສະນະອັນດີເລີດ ຂອງລະບອບສັງຄົມນິຍົມຢູ່ປະເທດເຮົາສະແດງອອກນັບມື້ພົ້ນເດັ່ນຂຶ້ນເລື້ອຍໆ ໃນຊີວິດຕົວຈິງຂອງປະຊາຊົນ ບົນພື້ນຖານ 6 ເປົ້າໝາຍໃຫຍ່ ເພື່ອສືບຕໍ່ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງຄື:

1. ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ ໂດຍຍູ້ການເຕີບໂຕເສດຖະກິດແຫ່ງຊາດ ໃຫ້ບັນລຸ 4% ຂຶ້ນໄປ.

2. ພັດທະນາຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດແລະການບໍລິການ.

3. ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.

4. ການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດທຳມະຊາດ.

5. ສ້າງພື້ນຖານໂຄງລ່າງທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດຈາກທີ່ຕັ້ງພູມສາດຂອງປະເທດ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ.

6. ຄຸ້ມຄອງ-ບໍລິຫານລັດໃຫ້ມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດແລະເຂັ້ມງວດ.




# ກົນລະຍຸດ

**ກົນລະຍຸດ:** ແປວ່າ ເລ້ລ່ຽມໃນການຮົບເລ້ລ່ຽມໃນການຮົບເລວ ແບບເຮັດເສິກສົງຄາມ, ວິທີການຕໍ່ສູ້ທີ່ຕ້ອງໃຊ້ກົນລະຍຸດ ຫຼືເວົ້າອີກແບບໜຶ່ງ ແມ່ນຄວາມສະຫຼາດ ພິໄຫວຕ່າງໆ ເພື່ອເອົາຊະນະຄູ່ຕໍ່ສູ້ ໃນການຕໍ່ສູ້ນັ້ນ ບາງຄັ້ງ ຝ່າຍກົງກັນຂ້າມມີຈຳນວນພົນຫລາຍກວ່າ, ອາວຸດກໍເໜືອກວ່າ ກົນລະຍຸດຈຶ່ງມີຄວາມຈຳເປັນຈະຕ້ອງໄດ້ຄົ້ນຄວ້າ ແລະໃຊ້ໃນການຕໍ່ສູ້ ເຄີຍໄດ້ຍິນເລື່ອງເລົ່າຂານທີ່ວ່າ "ເອົາ 1 ຕໍ່ 10" ໃຊ້ສົງຄາມແບບກອງຫລອນ ແລະ ອື່ນໆ.

ໃນສະໄໝພະເຈົ້າໄຊເສດຖາ ພວກພະມ້າເຂົ້າມາຮຸກຮານ. ທ່ານໄດ້ໃຊ້ກົນລະຍຸດຄື ເອົາທະຫານ ແລະ ພົນລະເຮືອນອອກຈາກວຽງຈັນ ແລ້ວໄປລີ້ຢູ່ປ່າ ພ້ອມທັງສະບຽງອາຫານ ເມື່ອພະມ້າມາເຖິງ ເຂົາກໍດີໃຈ ເພາະເຂົ້າເມືອງໄດ້ສະບາຍ ແລະ ເຂົ້າໃຈວ່າ ຊາວເມືອງຢ້ານເຂົາ ແລະ ແຕກໜີໄປໝົດ. ພວກພະມ້າ ບໍ່ມີເຂົ້າ ບໍ່ມີນ້ຳກິນ ກໍພາກັນອຶດຫິວ ແລ້ວເຂົາກໍນຳກຳລັງອອກໄປຕິດຕາມຢູ່ປ່າ ທະຫານພະມ້າອ່ອນເພຍ ບໍ່ມີເຂົ້າກິນ ທັງເປັນໄຂ້ປ່າຕາຍກອງລະເນດ ເມື່ອກຳລັງພະມ້າອ່ອນເພຍ ພະເຈົ້າໄຊເຊດຖາກໍສັ່ງທະຫານຫລອນຕີ ໃນທີ່ສຸດ ພະມ້າກໍຖອນທະຫານ ໃນເວລາພະມ້າຖອນທະຫານນັ້ນ ທະຫານຂອງພະເຈົ້າໄຊເຊດຖາກໍດັກສະກັດໂຈມຕີເສຍຫາຍໜັກ ນັ້ນຄື ການໃຊ້ກົນລະຍຸດເພື່ອໃຫ້ຕົກທ່າຮັບ "ກົນລະຍຸດ" ເປັນພາສາບາລີ ພາສາຂອງຄົນອິນເດຍບູຮານ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ເຈ້ຍ | ເຈັ້ຍ |
| ປຶ້ມ | ປື້ມ |
| ສາລານຸກົມ | ສາລະນຸກົມ |
| ສັບພະທານຸກົມ | ສັບພະນານຸກົມ |
| ປະທານຸກົມ | ປາທະນຸກົມ |
| ປະມວນຄຳສັບ | ປະມວນຄຳຊັບ |
| ພົດຈະນານຸກົມ | ພົດຈະນະນຸກົມ |
| ວັດຈະນານຸກົມ | ວັດຈະນະນຸກົມ |



## ສຸກສະບາຍຫາຍໂຣຄາ

# ຄຸນຄ່າທາງສານອາຫານຂອງຜັກປັ່ງ

ແປ ແລະ ຮຽບຮຽງໂດຍ: ສາວແອ່ນ



ຜັກປັ່ງ ມີຊື່ເອີ້ນເປັນພາສາອັງກິດວ່າ: Malabar spinach ເປັນຜັກທີ່ມີໃບສີຂຽວເຂັ້ມ ມີກ້ານສີມ່ວງ ແລະ ສີຂຽວ ເມື່ອນຳມາປຸງແຕ່ງອາຫານແລ້ວຈະມີຄວາມເມືອກ ແຕ່ທ່ານຮູ້ບໍວ່າ ຜັກປັ່ງມີຄຸນຄ່າທາງສານອາຫານຄືແນວໃດແດ່ ແລະ ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ຜູ້ຂຽນຈະມານຳສະເໜີຄຸນຄ່າທາງສານອາຫານຂອງຜັກປັ່ງ ໃຫ້ບັນດາທ່ານຜູ້ອ່ານໄດ້ຮັບຮູ້ນຳກັນ ດັ່ງນີ້:

**- ເບຕາແຄໂລທີນ:** ຈະປ່ຽນເປັນວິຕາມິນເອໃນຮ່າງກາຍ ເຊິ່ງມີປະໂຫຍດໃນການບຳລຸງສາຍຕາ ແລະ ຊ່ວຍຮັກສາຄວາມແຂງແຮງຂອງເຍື່ອເມືອກ ແລະ ຜິວໜັງ;

**- ວິຕາມິນຊີ:** ເປັນວິຕາມິນທີ່ຈຳເປັນສຳລັບການສ້າງຄໍລະເຈນ ເຊິ່ງເປັນອົງປະກອບສຳຄັນຂອງຜິວໜັງ ແລະ ຊ່ວຍສ້າງພູມຄຸ້ມກັນຮ່າງກາຍໃຫ້ແຂງແຮງ;

**- ແຄວຊຽມ:** ຊ່ວຍໃນການສ້າງຄວາມແຂງແຮງຂອງກະດູກ, ແຂ້ວ ແລະ ຊ່ວຍປ້ອງກັນໂຣກກະດູກຜ່ອຍ;

**- ແມກນີຊຽມ:** ເປັນແຮ່ທາດທີ່ມີບົດບາດສຳຄັນຕໍ່ການເຮັດວຽກຂອງເອນຊາຍໃນຮ່າງກາຍ ເຊິ່ງມີຫຼາຍກວ່າ 300 ຊະນິດ ແລະ ການເຮັດວຽກຂອງລະບົບປະສາດ ແລະ ກ້າມຊີ້ນ;

**- ມິວຊິນ:** ເປັນສານເມືອກ ທີ່ຊ່ວຍໃນການສ້າງຄວາມແຂງແຮງໃຫ້ແກ່ກະເພາະ ແລະ ພູມຄຸ້ມກັນຮ່າງກາຍ.

ພ້ອມນັ້ນ, ວິຕາມິນຊີ ແລະ ເບຕ້າເຄໂລທີນທີ່ມີຫຼາຍໃນຜັກຊະນິດນີ້ ຈະເຮັດໜ້າທີ່ເປັນສານຕ້ານອະນຸມູນອິດສະຫຼະ ຈຶ່ງຊ່ວຍຫຼຸດຜ່ອນອາການແກ່ກ່ອນໄວ ແລະ ຊ່ວຍປ້ອງກັນພະຍາດຕ່າງໆທີ່ຈະເກີດຂຶ້ນໃນຊີວິດປະຈຳວັນ ເຊັ່ນ: ຄວາມດັນເລືອດສູງ ແລະ ໂຣກຫົວໃຈ... ນອກນັ້ນ, ຍັງມີການສຶກສາຄົ້ນພົບວ່າ ເບຕ້າເຄໂລທີນ ມີສ່ວນຊ່ວຍໃນການປ້ອງກັນມະເຮັງໃນໂພ້ງປາກ ຄົນຍີ່ປຸ່ນນິຍົມກິນຜັກປັ່ງ ເພາະໃນຜັກປັ່ງອຸດົມໄປດ້ວຍສານເບຕ້າເຄໂລທີນ ຈຶ່ງເຊື່ອວ່າຊ່ວຍປ້ອງກັນໂຣກມະເຮັງໄດ້.

www.sanook.com



## ອາດກະວີລາວ

# ໃຕ້ຮົ່ມຜັກ

\# ໂດຍ: ອານົງເດດ

✻ ຕົ້ນໄມ້ມີຮາກເຫງົ້າ
ຈຶ່ງເປັນລຳກົມງາມ
ຂຽວກະຈິຕາມຕົ້ນ
ນານວັນກໍຍິ່ງສູງໃຫຍ່ຂຶ້ນ
ຊີຢັ່ງລົງດິນ
ດອກບານໃບດົ້ວ
ສາຂາກ້ານກິ່ງ
ເປັນໂພກວ້າງຮົ່ມເຢັນ ງາມເດ!

✻ ຕົ້ນໄມ້ເປັນບ່ອນຊິ້ນ
ສາລິກາໂບຍບິນ
ຄືນໄປ-ມາເຊົາຊິ້ນ
ໃຜກໍແພງຮັກເຈົ້າ
ອາໄສຮົ່ມເງົາເຢັນ
ເຈີດແຊວສຽງຮ້ອງ
ບັນເທົາຄວາມອິດເມື່ອຍ
ລຳຕົ້ນສະຫງ່າງາມ ໂພເອີຍ!

✻ ຮົ່ມໄມ້ປຸນປຽບໄດ້
ອົດທົນນຳພາທາງ
ຄອຍດູແລປະຊາເຊື້ອ
ເປັນດັ່ງເງົາຄູ່ຂ້າງ
ເໝືອນພັກປະຊາຊົນ
ເບິ່ງແຍງຊູຊ້ວານ
ປວງຊົນລາວບັນດາເຜົ່າ
ປະດັບເອ້ຮ່າງຄີງ ຊອບແລ້ວ!

✻ ນັບແຕ່ວັນກໍ່ຕັ້ງ
ປະເທດລາວມີໄຊ
ເມືອງລາວໃນວັນນີ້
ຫ່າງໄກຄຳວ່າດ້ອຍ
ມີພັກນຳພາ
ພັດທະນາໄກກ້າວ
ມີຄວາມແຕກຕ່າງ
ພັດທະນາກ້າວກວ່າຫຼັງ ທ່ານເອີຍ!

✻ ພ້ອມທັງເຮືອງຮຸ່ງແຈ້ງ
ຍ້ອນວ່າມີການນຳ
ລາວຈຶ່ງສົດໃສແຈ້ງ
ເປັນດັ່ງດາວຢູ່ຟ້າ
ແສງສ່ອງປະກາຍສີ
ພັກພາເດີນກ້າວ
ເຮືອງຮອງໂດດເດັ່ນ
ໃສເຫຼື້ອມເປັ່ງປະກາຍ

✻ ຂໍຈຳຈາລຶກໄວ້
ຂໍສືບສານແນວທາງ
ເຝິກໃຫ້ຕົນຮຽນຮູ້
ໃຕ້ຮົ່ມທຸງກ່ຽວຄ້ອນ
ບຸນຄຸນພັກປະຊາຊົນລາວ
ພັກວາດວາງແນໄວ້
ເດີນຕາມທາງພັກ
ໜັກແໜ້ນແກ່ນແຂງ ທ່ານເອີຍ!



## ຫົກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສາວຈົ້ມ

✻ **ເດືອນ**ມີນາ ກຽມຈາກລາຜ່ານພົ້ນ ໄລລັບຕາມເວລາ ເດືອນ**ເມສາກຽມເຢືອນ** ຢ່ອງຢາມຖາມຢື້ ເທດການຮື່ຮາກ້ອງ ກຽມສະຫຼອງປີໃໝ່ **ບຸນສົງການມໍໂກ້** ຫຼາຍຄົນຕັ້ງຕໍ່ຄອຍ **ຊົ້ນແລ້ວ!**

✻ **ເກືອບ**ສາມເດືອນຜ່ານໄປ ກັບໜັງສືພິມ **"ຜູ້ແທນປະຊາຊົນ"** ໃນຮູບແບບໃໝ່ **ລາຍສັບປະດາ** ຈາກ **8** ມາເປັນ **12 ໜ້າ** ເລີ່ມ ແຕ່ເດືອນ**ມັງກອນ 2023** ຕົ້ນມາ. ເປັນແນວໃດພີ່ນ້ອງ ເພື່ອນນັກອ່ານທັງຫລາຍ ມີອັນໃດຄາໃຈ ຢາກໃຫ້ປັບປຸງແກ້ ລົບກວນອາໂທລເອົ້າຕັ້ງໂຕະເຮົາ ລໍຢູ່ **021 840 430** ແມ່ນເບີ ລໍໃຫ້ທ່ານຕໍ່ສາຍ **ບັ້ນແລ້ວ!**

## ຊອບຍິ້ມ

\# ແອ່ບຕຸ້ງ

**ເລື່ອງ: ສະເໜ່ສາວມັກ**

ຊາຍຂີ້ໝາກເຫຼືອງຄົນໜຶ່ງ ຍ່າງເຂົ້າໂຮງແອບກຳລັງກາຍ, ພໍເຂົ້າໄປ ລາວກໍສັງເກດເຫັນສາວແຊັກຊີຄົນໜຶ່ງ, ລາວຈຶ່ງຍ່າງໄປຫາຄູເຝິກ ແລ້ວຖາມວ່າ:

\+ *ໃຫ້ຂ້ອຍໃຊ້ເຄື່ອງໃດ ຈຶ່ງຊິເຮັດໃຫ້ສາວນັ້ນມັກ?*

\- *ໃຊ້ຕູ້ ATM ຢູ່ທາງນອກພຸ້ນ ແລ້ວຖອນເງິນອອກມາຫຼາຍໆ*

\+ ?!



## ຄະຕິເຕືອນໃຈ

\# ດອກຂະຍອມ

ຍິ່ງສູງ ຍິ່ງໜາວ
ທົວທາງຍາວ ໄກ້ຊີຮອດ ແຮ່ງເມື່ອຍ




# ຫົວ – ເຫຼັ້ມ

'ຫົວ' ເປັນຄຳນາມ ຄວາມໝາຍຕົ້ນຕໍແມ່ນໝາຍເຖິງ "ສ່ວນຂອງຮ່າງກາຍເໜືອຄໍຂຶ້ນໄປ" ເຊັ່ນ ຫົວຄົນ, ຫົວງົວ, ຫົວໝູ.

ນອກຈາກນັ້ນ, 'ຫົວ' ຍັງໝາຍເຖິງ "ສ່ວນທີ່ຢູ່ເທິງ" ເຊັ່ນ ຫົວພູ, ຫົວເຮືອນ.

'ຫົວ' ຍັງໝາຍເຖິງ "ສິ່ງທີ່ມີລັກສະນະເປັນປອມເປັນເຫງົ້າເປັນກ້ອນ ເຊັ່ນ ຫົວເຜືອກ ຫົວມັນ ຫົວຜັກທຽມ;

'ຫົວ' ຍັງໝາຍເຖິງ "ສ່ວນທີ່ຢູ່ກ່ອນ, ຢູ່ກົກ" ເຊັ່ນ ຫົວເຮືອ, ຫົວແຖວ, ຫົວໜ້າ, ຫົວຕາ, ຫົວຄິ້ວ, ຫົວປີ;

'ຫົວ' ຍັງໝາຍເຖິງ "ສິ່ງທີ່ອອກມາກ່ອນ ເຊິ່ງເຂັ້ມຂຸ້ນ ແລະ ນິຍົມວ່າດີ" ເຊັ່ນ ຫົວເຫຼົ້າ, ຫົວຢາ, ຫົວນ້ຳຫອມ, ຫົວກະທິ;

'ຫົວ' ຍັງໝາຍເຖິງ "ເວລາເລີ່ມຕົ້ນ" ເຊັ່ນ ຫົວທີ;

'ຫົວ' ຍັງໝາຍເຖິງ "ຕົ້ນເລື່ອງຫຼືໃຈຄວາມສຳຄັນ" ເຊັ່ນ ຫົວຂໍ້;

ພ້ອມດຽວກັນນັ້ນ, 'ຫົວ' ຍັງໃຊ້ເປັນຄຳລັກສະນະນາມທີ່ເອີ້ນປຶ້ມເປັນເຫຼັ້ມວ່າ 'ຫົວ' ເຊັ່ນ ປຶ້ມຂຽນ 2 ຫົວ, ປຶ້ມອ່ານ 5 ຫົວ. ແລະ ຍັງສາມາດໃຊ້ເປັນຄຳລັກສະນະນາມຂອງບັນດາພືດທີ່ເປັນຫົວ ເຊັ່ນ ມັນດ້າງ 5 ຫົວ, ຫົວຜັກກາດຂາວ 8 ຫົວ, ມັນເຜົາ 10 ຫົວ...

'ເຫຼັ້ມ' ເປັນຄຳນາມ ໝາຍເຖິງ "ສາງ, ເຮືອນໃສ່ສິ່ງຂອງອັນເປັນຂອງຫຼວງ" ເຊັ່ນ

- ເກັບມ້ຽນສິ່ງຂອງໄວ້ໃນເຫຼັ້ມໃນສາງ. (ບໍ່ມັກໃຊ້ເປັນຄຳໂດດ ຈະມັກມີຄຳວ່າ ສາງ ຊ້ອນໄປນຳ)

'ເຫຼັ້ມ' ທີ່ມັກໃຊ້ເລື້ອຍໆ ກໍແມ່ນໃຊ້ເປັນຄຳລັກສະນະນາມທີ່ເອີ້ນສິ່ງຂອງເປັນອັນ ມີຮູບຮ່າງແປເປັນໂກບ ທາງໃນສາມາດນຳສິ່ງຂອງໃສ່ໄດ້ ດັ່ງ ເຮືອ, ກວຽນ ເຊັ່ນ ເຮືອສອງເຫຼັ້ມ (ແຕ່ປັດຈຸບັນນິຍົມໃຊ້ຄຳວ່າ ລຳ), ກວຽນສອງເຫຼັ້ມ ແລະ ຍັງໃຊ້ກັບສິ່ງອື່ນໆອີກ ດັ່ງ ແຂ້ວ 32 ເຫຼັ້ມ, ທຽນ 5 ເຫຼັ້ມ. ພ້ອມດຽວກັນນັ້ນ ກໍໃຊ້ເປັນລັກສະນະນາມສຳລັບປຶ້ມຫົວໃຫຍ່ໆ ແລະ ປຶ້ມແບບຮຽນ ເຊັ່ນ

- ປຶ້ມແບບຮຽນພາສາລາວ ປ.1 ມີສອງເຫຼັ້ມ: ເຫຼັ້ມ 1 ແລະ ເຫຼັ້ມ 2.
- ອະດີດພະນັກງານຊ່ຽວຊານອາວຸໂສມອບປຶ້ມປະຫວັດສາດລາວ 7 ເຫຼັ້ມ ໃຫ້ແກ່ ມຊ.
- CRI ນຳສະເໜີປຶ້ມໃໝ່ 4 ເຫຼັ້ມ ພາສາລາວ-ຈີນ ພາຍໃຕ້ຫົວຂໍ້ "ເປີດປະຕູສູ່ປະເທດຈີນ".
- ໃນການຂຽນປຶ້ມປະມວນຄຳສັບພາສາລາວມື້ລະຄຳສອງຄຳ ແມ່ນໄດ້ອີງໃສ່ວັດຈະນານຸກົມພາສາລາວຫຼາຍເຫຼັ້ມ.

# ຂໍ້ສັງເກດ: 'ຫົວ' ມັກໃຊ້ເປັນລັກສະນະນາມເອີ້ນ ປຶ້ມຂຽນ, ປຶ້ມອ່ານທົ່ວໆໄປ ແລະ ໃຊ້ເວົ້າແບບບໍ່ເປັນທາງການເປັນສ່ວນໃຫຍ່. ສ່ວນ 'ເຫຼັ້ມ' ຈະນິຍົມໃຊ້ເອີ້ນ ປຶ້ມແບບຮຽນ, ປຶ້ມນະວະນິຍາຍ ຫຼືວັດຈະນານຸກົມຫົວໃຫຍ່ໆ ທີ່ມັກໃຊ້ເວົ້າຢ່າງເປັນທາງການ.

# ຣັດເຊຍ ແລະ ຈີນ ຍົກລະດັບການພົວພັນໃຫ້ສູ່ລະດັບສູງຂຶ້ນ



ການຢ້ຽມຢາມຣັດເຊຍຂອງປະທານປະເທດຈີນ ທ່ານ ສີ ຈິ້ນ ຜິງ ຈະແມ່ນເຫດການຈຸດສຸມໃນການພົວພັນລະຫວ່າງສອງປະເທດໃນປີນີ້. ຖະແຫຼງການຂອງກະຊວງການຕ່າງປະເທດຣັດເຊຍ ໃນວັນທີ 30 ມັງກອນ ໃຫ້ຮູ້ວ່າ: ທ່ານ ປະທານາທິບໍດີຣັດເຊຍ Vladimir Putin ໄດ້ເຊື້ອເຊີນທ່ານປະທານປະເທດຈີນ ສີ ຈິ້ນ ຜິງ ມາຢ້ຽມຢາມຣັດເຊຍໃນລະດູບານໃໝ່ປີນີ້. ສອງຝ່າຍຈະເອົາໃຈໃສ່ເຖິງການຍົກສູງການພົວພັນສອງຝ່າຍຂຶ້ນສູ່ລະດັບສູງ.

ກະຊວງການຕ່າງປະເທດຣັດເຊຍ ໄດ້ເນັ້ນໜັກວ່າ ມົດສະກູ ຈະພ້ອມກັບ ປັກກິ່ງ ປົກປ້ອງສິດອຳນາດຂອງສປຊ, ເພີ່ມທະວີນ້ຳໃຈສາມັກຄີ ແລະ ການຮ່ວມມືໃນກຸ່ມບັນດາພື້ນຖານເສດຖະກິດພັດທະນາ ແລະ ຫາກໍ່ພົ້ນເດັ່ນຂຶ້ນແຖວໜ້າໂລກ (G20), ເຮັດໃຫ້ການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານໃນກຸ່ມບັນດາພື້ນຖານເສດຖະກິດຫາກໍ່ພົ້ນເດັ່ນຂຶ້ນແຖວໜ້າໂລກ (BRICS) ເລິກເຊິ່ງກ່ວາອີກ, ຊຸກຍູ້ການເຄື່ອນໄຫວຂອງອົງການຮ່ວມມືຊາງໄຮ (SCO), ປັບປຸງບົດບາດຂອງເວທີປາໄສຮ່ວມມືເສດຖະກິດອາຊີ-ປາຊີຟິກ (APEC).

ພ້ອມກັນນັ້ນ, ທັງສອງຝ່າຍ ຈະເພີ່ມທະວີການຮ່ວມມືຢູ່ບັນດາເວທີປາໄສຄື: EAS (ກອງປະຊຸມສຸດຍອດອາຊີຕາເວັນອອກ), ARF (ເວທີປາໄສອາຊຽນ), ADMM+ (ກອງປະຊຸມລັດຖະມົນຕີກະຊວງປ້ອງກັນປະເທດອາຊຽນເປີດກວ້າງ), ສະໜັບສະໜູນບົດບາດເປັນໃຈກາງຂອງອາຊຽນ ຄືແມ່ນປັດໄຈໜຶ່ງທີ່ສຳຄັນຂອງໂຄງປະກອບໃນພາກພື້ນ ຢູ່ອາຊີຕາເວັນອອກ.

**ແຫຼ່ງຄັດຈາກ: vovworld.vn**

# ຍີ່ປຸ່ນ ໄຟຂຽວບໍ່ຕ້ອງໃສ່ຜ້າອັດປາກ-ດັງທັງໃນແລະນອກອາຄານ



ລັດຖະບານຍີ່ປຸ່ນ ໄດ້ປະກາດຫຼຸດຜ່ອນຄຳແນະນຳເລື່ອງການໃສ່ຜ້າອັດປາກ-ດັງ ໃນວັນທີ 13 ມີນາຜ່ານມາ ໂດຍປະຊາຊົນທົ່ວໄປບໍ່ຈຳເປັນຕ້ອງໃສ່ຜ້າອັດປາກ-ດັງອີກຕໍ່ໄປ ບໍ່ວ່າຈະຢູ່ໃນ ຫຼື ນອກອາຄານ, ແຕ່ຍັງແນະນຳໃຫ້ໃສ່ເມື່ອຢູ່ໃນລົດໄຟທີ່ມີຄົນແອອັດ, ໃນໂຮງໝໍ ແລະ ສະຖານເບິ່ງແຍງຜູ້ສູງອາຍຸ.



ອີງຕາມການລາຍງານຂ່າວຂອງສຳນັກຂ່າວ AFP ລາຍງານວ່າ: ຍີ່ປຸ່ນ ບໍ່ເຄີຍອອກຂໍ້ບັງຄັບທາງກົດໝາຍໃຫ້ມີການໃສ່ຜ້າອັດປາກ-ດັງ ຄືປະເທດອື່ນໆ, ແຕ່ຈະເປັນການອອກຄຳແນະນຳໃຫ້ປະຊາຊົນແທນ ເຊິ່ງພົນລະເມືອງຍີ່ປຸ່ນໄດ້ປະຕິບັດຕາມຄຳແນະນຳດັ່ງກ່າວ ຢ່າງເຄັ່ງຂັດນັບແຕ່ໄລຍະໂຄວິດລະບາດໃໝ່ໆ.

ນັບແຕ່ໂຄວິດລະບາດ ຍີ່ປຸ່ນເປັນປະເທດທີ່ພະຍາຍາມຫຼີກລ່ຽງການລັອກດາວໃຫຍ່ ແລະ ການໃຊ້ຂໍ້ຈຳກັດທີ່ເຂັ້ມງວດອື່ນໆ ໂດຍຈຳນວນຜູ້ເສຍຊີວິດຈາກໂຄວິດຢູ່ຍີ່ປຸ່ນມີທັງໝົດ 73.199 ຄົນ ຈາກຈຳນວນປະຊາກອນທົ່ວປະເທດ 125 ລ້ານຄົນ ເຊິ່ງຖືເປັນອັດຕາຂ້ອນຂ້າງສູງຖ້າທຽບໃສ່ປະເທດອື່ນໆ. ນັກສັງເກດການລະບຸວ່າ: ນັ້ນອາດເປັນຍ້ອນປະຊາຊົນຍີ່ປຸ່ນມີລະບຽບວິໄນໃນການໃສ່ຜ້າອັດປາກ-ດັງສູງ ລວມທັງໃຫ້ການຮ່ວມມືປະຕິບັດຕາມມາດຕະການຄວບຄຸມພະຍາດອື່ນໆ ບວກກັບການປິດຊາຍແດນບໍ່ໃຫ້ຄົນຕ່າງປະເທດເຂົ້າມາໃນປະເທດໄລຍະກ່ອນໜ້ານີ້.

# ອາກຊັງຕິນ ປະເຊີນສະພາບເງິນເຟີ້ສູງເຖິງ 100% ຄັ້ງທຳອິດໃນຮອບ 32 ປີ



ອັດຕາເງິນເຟີ້ໃນຮອບ 12 ເດືອນຫຼ້າສຸດຂອງອາກຊັງຕິນ ສູງເປັນສະຖິຕິນັບແຕ່ປີ 1991 ດ້ວຍສະຖິຕິ 102,5%.

ໃນວັນທີ 15 ມີນາຜ່ານມາ ໄດ້ມີການລາຍງານຂ່າວວ່າ: ສຳນັກງານສະຖິຕິແຫ່ງຊາດຂອງອາກຊັງຕິນລາຍງານອັດຕາເງິນເຟີ້ໃນຮອບ 12 ເດືອນຫຼ້າສຸດ ຈົນຮອດເດືອນກຸມພາຜ່ານມາ ມີ 102,5% ເປັນສະຖິຕິສູງທີ່ສຸດນັບແຕ່ປີ 1991 ໂດຍເປັນຜົນມາຈາກດັດຊະນີລາຄາຜູ້ບໍລິໂພກ (CPI) ເຊິ່ງເພີ່ມຂຶ້ນ 6,6% ສະເພາະເດືອນກຸມພາຜ່ານມາ.

ເຖິງວ່າອາກຊັງຕິນເປັນປະເທດທີ່ມີຂະໜາດເສດຖະກິດໃຫຍ່ເປັນອັນດັບສອງໃນອາເມລິກາລາຕິນ ຮອງຈາກບາຣຊິນ ແຕ່ເສດຖະກິດຂອງປະເທດສັ່ນຄອນ ແລະ ບໍ່ມີສະຖຽນລະພາບຢ່າງໜັກເນື່ອງຈາກວິກິດໜີ້ສາທາລະນະໃນປີ 1980 ເຊິ່ງເຮັດໃຫ້ອາກຊັງຕິນປະເຊີນສະພາບເງິນເຟີ້ເພີ່ມຂຶ້ນຫຼາຍກວ່າ 3.000% ໃນປີ 1989 ຍັງສົ່ງຜົນກະທົບຕໍ່ເນື່ອງຈົນຮອດປັດຈຸບັນ ໂດຍລັດຖະບານບັນລຸຂໍ້ຕົກລົງກັບກອງທຶນການເງິນສາກົນ (IMF) ໃນປີ 2022ໃນການຂໍຮັບເງິນສິນເຊື່ອ 44.000 ລ້ານໂດລາສະຫະລັດ.

ຂໍ້ຕົກລົງດັ່ງກ່າວ ເປັນການແທນທີ່ຂໍ້ຕົກລົງເກົ່າ ໃນປີ 2018 ເຊິ່ງມີມູນຄ່າ 57.000 ລ້ານໂດລາສະຫະລັດ ເນື່ອງຈາກອາກຊັງຕິນ ຍອມຮັບວ່າ: ຄວາມຮຸນແຮງຂອງສະພາບເງິນເຟີ້ສົ່ງຜົນກະທົບຕໍ່ຄວາມລາບລື່ນຂອງການຊຳລະໜີ້.

## ເບິ່ງໄວ້ ໄດ້ບົດຮຽນ

◆ ວິເສດ ສະແຫວງສຶກສາ

# ນຳໃຊ້ວິທີພິເສດເພື່ອດຶງດູດເອົາຄົນເກັ່ງພິເສດ

ຂອງຕ້ອນສຳລັບທ່ານຜູ້ອ່ານໃນບົດນີ້ ກໍຄືບົດຮຽນການນຳໃຊ້ວິທີການພິເສດທີ່ເໝາະສົມ ເພື່ອດຶງດູດເອົາຄົນເກັ່ງຄົນມີຄວາມຮູ້ຄວາມສາມາດ ໃນດ້ານຕ່າງໆຈາກຕ່າງປະເທດເຂົ້າໄປຊ່ວຍຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃນບັນດາເປົ້າໝາຍທີ່ມີຄວາມຕ້ອງການ. ໃນໂລກປັດຈຸບັນເຖິງວ່າຈະມີຄວາມກ້າວໜ້າທາງດ້ານວິທະຍາສາດ, ເຕັກໂນໂລຊີ ລ້ຳຍຸກໃນສາລະພັດຂະແໜງ ມີມະນຸດກົນສາມາດເຮັດວຽກແທນມະນຸດແທ້ໄດ້ປານໃດກໍຕາມ ແຕ່ຄວາມຕ້ອງການຊັບພະຍາກອນທີ່ເປັນມະນຸດແທ້ໆນັ້ນຍັງເປັນເປົ້າໝາຍບຸລິມະສິດຂອງຫຼາຍໆປະເທດລວມທັງປະເທດອຸດສະຫະກຳທີ່ຈະເລີນຮັ່ງມີເຊັ່ນ ຍີ່ປຸ່ນ, ອັງກິດ, ສປ.ຈີນ, ລັດເຊຍ ແລະອື່ນໆ. ແນ່ນອນໃນປະເທດເຫຼົ່ານີ້ເອງ ກໍມີນັກວິຊາການ ແລະ ຊ່ຽວຊານລະດັບຫົວກະທິໃນບັນດາຂະແໜງການຕ່າງໆ ແຕ່ເມື່ອສົມທຽບກັບຈັງຫວະການພັດທະນາແລ້ວ ກໍພັດຍັງບໍ່ພຽງພໍ ຫຼືຍັງຂາດຄົນເກັ່ງສະເພາະກິດໃນຂະແໜງການທີ່ບໍ່ສາມາດສ້າງໄດ້ດ້ວຍຕົນເອງ ໃຫ້ຄົບຖ້ວນໄດ້ ດັ່ງນັ້ນ ຈຶ່ງຈຳເປັນຕ້ອງໄດ້ນຳເຂົ້າຊ່ຽວຊານ-ນັກວິຊາການຈາກຕ່າງປະເທດ ຄວາມຕ້ອງການດັ່ງກ່າວ ໄດ້ກໍ່ໃຫ້ເກີດມີການແຂ່ງຂັນຍາດນັກວິຊາການ-ຊ່ຽວຊານກັນໃນລະດັບພາກພື້ນ ແລະ ສາກົນ. ວ່າກັນວ່າໃນເຂດອາຊຽນຂອງພວກເຮົານີ້ປະເທດສິງກະໂປສາມາດດຶງດູດເອົາຊ່ຽວຊານທີ່ເກັ່ງຈາກຕ່າງປະເທດ ໄດ້ກວ່າປະເທດອື່ນໆດ້ວຍນະໂຍບາຍທີ່ແສນເອື້ອອຳນວຍ ແລະດ້ວຍເງິນຄ່ຳເມື່ອຍສູງ. ຕໍ່ໄປຂໍສະເໜີກ່ຽວກັບນະໂຍບາຍຂອງບາງປະເທດທີ່ແຂວງຢູນານ ສປຈີນ, ທາງການຂອງແຂວງນີ້ໄດ້ນຳໃຊ້ນະໂຍບາຍອອກວິຊາທີ່ສຸດແສນສະດວກ ເພື່ອດຶງດູດເອົາຊ່ຽວຊານຕ່າງປະເທດທີ່ມີຄຸນນະພາບຍອດຢ້ຽມເຂົ້າໄປພັດທະນາເລີ່ມປະຕິບັດແຕ່ວັນທີ 1 ມີນາ 2018 ເປັນຕົ້ນມາ. ວິຊາເຂົ້າ-ອອກ ປະເພດນີ້ມີອາຍຸໃຊ້ງານຍາວເຖິງ 10 ປີ ເອີ້ນໄດ້ວ່າເປັນວິຊາມາລາທອນ ທີ່ໃຊ້ໄດ້ຫຼາຍເທື່ອ ແລະ ໃນແຕ່ລະເທື່ອນັ້ນສາມາດພັກເຊົາໄດ້ຍາວເຖິງ 180 ວັນ ຫຼື ປະມານເຄິ່ງປີ. ວິຊາຢາງຢືດຊະນິດນີ້ສາມາດກຸ່ມໄດ້ຮອດພັນລະຍາ-ສາມີ ແລະ ລູກນ້ອຍຂອງເຈົ້າຜູ້ໄດ້ນຳໃຊ້ວິຊາອີກດ້ວຍ.

ສ່ວນຢູ່ປະເທດອັງກິດນັ້ນ ທາງການກໍມີນະໂຍບາຍດີໆ ສຳລັບຈ່ອງນັກສຶກສາຕ່າງໆປະເທດໃຫ້ຢູ່ເຮັດວຽກຕໍ່ໄດ້ຕື່ມ ເປັນເວລາ 2 ປີພາຍຫຼັງຮຽນຈົບ. ນະໂຍບາຍທີ່ວ່ານີ້ເລີ່ມປະຕິບັດແຕ່ປີ 2020 ເປັນຕົ້ນມາ. ໃນເມື່ອກ່ອນ, ນັກສຶກສາຕ່າງປະເທດທີ່ຮຽນຈົບສາມາດຢູ່ເຮັດວຽກໄດ້ພຽງ 4 ເດືອນ. ວຽກທີ່ໃຫ້ນັກສຶກສາຕ່າງປະເທດເຮັດໃນເບື້ອງຕົ້ນນັ້ນ ເປັນວຽກທົ່ວໄປ ແຕ່ຜ່ານໄປໄລຍະໜຶ່ງ ຖ້າເຫັນວ່ານັກສຶກສາຄົນໃດມີຄວາມສາມາດ, ເຮັດວຽກຂະຫຍັນ ກໍສາມາດຫັນໄປເຮັດວຽກນີ້ຕ້ອງການຄຸນນະພາບສູງຂຶ້ນ. ສະຖິຕິເມື່ອ 2 ປີຜ່ານມານັ້ນ ໃຫ້ຮູ້ວ່າມີນັກສຶກສາຕ່າງປະເທດ ຢູ່ປະເທດອັງກິດ ປະມານ 450.000 ຄົນ. ພາຍຫຼັງ ອອກຈາກການເປັນສະມາຊິກສະຫະພາບເອີຣົບ (ອີຢູ), ອັງກິດໄດ້ປະເຊີນກັບບັນຫາຂາດແຄນແຮງງານ ດັ່ງນັ້ນຈຶ່ງໄດ້ນຳໃຊ້ນະໂຍບາຍດຶງດູດແຮງງານຄຸນນະພາບຈາກຕ່າງປະເທດ ເພື່ອທົດແທນແຮງງານທີ່ມາຈາກບັນດາປະເທດສະມາຊິກອີຢູ ໃນເມື່ອກ່ອນ. ບົດນີ້ກ້ຽວມາເບິ່ງບົດຮຽນຂອງອົດສະຕຣາລີ ໃນການດຶງດູດເອົາຊ່ຽວຊານ ກໍຄືນັກລົງທຶນຕ່າງປະເທດ ເຊິ່ງໄດ້ເລີ່ມຂຶ້ນຢ່າງຈິງຈັງໃນປີ 2014, ໃນສະໄໝທ່ານ ໂທນີ ແອບບອດ (Tony Abbot) ຍັງເປັນນາຍົກລັດຖະມົນຕີ ນະໂຍບາຍດຶງດູດດັ່ງກ່າວໄດ້ກຳນົດໂຄຕານຳເຂົ້າຄັກແນ່ຄືພຽງ 457 ຄົນ ແລະ ຕ້ອງເປັນຊ່ຽວຊານທີ່ຊຳນານງານແທ້ໆ ຖ້າເປັນນັກລົງທຶນກໍຕ້ອງເປັນມືອາຊີບ ແລະ ທີ່ມີຖົງເງິນໃຫຍ່ໆ. ໂຄຕາທີ່ວ່ານັ້ນ ກຳນົດຂຶ້ນໂດຍສອດຄ່ອງກັບບັນດາຂະແໜງການທີ່ຕ້ອງການຊ່ຽວຊານຕ່າງປະເທດໃນແຕ່ລະສາຂາອາຊີບ ບໍ່ແມ່ນນຳເຂົ້າຕາມມີຕາມເກີດ ເຊິ່ງຈະເຮັດໃຫ້ມີບັນຫາ "ເຫຼືອບໍ່ພໍ". ເງື່ອນໄຂການນຳເຂົ້າຊ່ຽວຊານ ແລະ ນັກລົງທຶນຕ່າງປະເທດນັ້ນມີຢູ່ 2 ຂໍ້ຄື: ເພື່ອຕອບໂຈດສະພາບຂາດແຄນບຸກຄະລາກອນໃນຂະແໜງການທຸລະກິດໜຶ່ງ ແລະ ການນຳເຂົ້າຊ່ຽວຊານເຫຼົ່ານັ້ນຈະຕ້ອງບໍ່ກາຍເປັນພາລະແບກຫາບດ້ານການເງິນໃຫ້ແກ່ຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ. ບັນດາຊ່ຽວຊານຕ່າງປະທເດທີ່ເປັນເປົ້າໝາຍນຳເຂົ້າທັງໝົດໄດ້ຮັບນະໂຍບາຍດ້ານວິຊາເຂົ້າ-ອອກປະເທດທີ່ເອື້ອຍອຳນວຍທີ່ສຸດ.

ຂໍປິດທ້າຍບົດນີ້ດ້ວຍຂ່າວຈາກຫວຽດນາມທີ່ບອກວ່າ ປະເທດນີ້ ໄດ້ນຳໃຊ້ການສຶກສາເປັນຂໍກຸນແຈໃນການສ້າງນັກວິຊາການທີ່ມີຄວາມຊຳນານງານເພື່ອພັດທະນາປະເທດຫວຽດນາມ ໃຫ້ເປັນປະເທດອຸດສາຫະກຳ ແລະ ເພື່ອແຂ່ງຂັນໃນຕະຫຼາດແຮງງານພາກພື້ນສາກົນ ໝາຍຄວາມວ່າທັງສ້າງແຮງງານ ເພື່ອສົ່ງອອກສູ່ຕະຫຼາດແຮງງານສາກົນ ທັງເພື່ອນຳໃຊ້ຢູ່ພາຍໃນ. ດັ່ງນັ້ນ ຊາວໜຸ່ມນັກສຶກສາຫວຽດນາມຈຶ່ງເລືອກຮຽນວິຊາທີ່ຕະຫຼາດແຮງງານຕ່າງປະເທດມີຄວາມຕ້ອງການເຊັ່ນ ວິຊາເຕັກໂນໂລຊີ, ອຸດສາຫະກຳ, ກົດໝາຍສາກົນ, ວິຊາຄຸ້ມຄອງ-ດຳເນີນທຸລະກິດ ແລະ ການຄ້າເປັນຕົ້ນຕໍ.



ກໍ່ສ້າງດ້ວຍຄວາມຮັບຜິດຊອບ

• ໂດຍ : ພູຜາ




## ນັກຕຶກປາທີ່ຊຳນານ

*# ບ່າວກະບື*

*ສີ ແລະ ຄຳ ພາກັນໄປຕຶກປາ. ພວກເຂົາຕຶກໄດ້ປາຫຼາຍໂຕກ່ອນຈະກັບເຂົ້າສູ່ຝັ່ງ.*

*ສີ: "ຫວັງວ່າໂຕຄົງຈື່ຈຸດທີ່ພວກເຮົາຕຶກປາໝູ່ນີ້ໄດ້".*

*ຄຳ: "ໄດ້ໂອ... ເຮົາຂີດຕີນກາ "X" ໄວ້ແຄມເຮືອ ເພື່ອໝາຍຈຸດນັ້ນໄວ້ພໍແຮງແລ້ວ"*

*ສີ: "ຈັ່ງແມ່ນຊາດໂຕເຫງົາ... ຊິຮູ້ໄດ້ແນວໃດວ່າມື້ອື່ນນີ້ ພວກເຮົາຈະໄດ້ໃຊ້ເຮືອລຳເກົ່ານີ້ໄປຕຶກປາອີກ?"*

## EXPERIENCED FISHERMEN

***# BAOKBU***

SY and Kham went fishing. They caught a lot of fish and returned to the shore.

Sy: "I hope you remember the spot where we caugth all these fish".

Kham: "Yes, I marked X on the side of the boat to mark the spot".

SY: "You idiot! How do we know we will get the same boat tomorrow?"



120

20 / 03 / 23

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ຂັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ